# ຈຳປາສີ່ຕົ້ນ



ຄະນະກຳມະການ ວິທະຍາສາດສັງຄົມ

ສະຖາບັນຄົ້ນຄວ້າ ສິລະປະວັນນະຄະດີ

ແລະ ພາສາສາດ

ວຽງຈັນ 1992

# ຈຳປາສີ່ຕົ້ນ



ຄະນະກຳມະການ ວິທະຍາສາດ ສັງຄົມ

ສະຖາບັນຄົ້ນຄ້ວາ ສິລະປະວັນນະຄະດີ

ແລະ ພາສາສາດ

ວຽງຈັນ 1992

# ຄຳນຳ

ພື້ນຈຳປາສີ່ຕົ້ນ ເປັນ ພື້ນເກົ່າແກ່ ເຊິ່ງນັບເປັນວັນນະກຳເອກເລື່ອງໜຶ່ງທີ່ມີຂະໜາດຍາວ ຂອງລາວ. ປວງຊົນລາວຕັ້ງແຕ່ເໜືອເຖິງໃຕ້ ຕະຫລອດຈົນຮອດຄົນລາວ ທີ່ຢູ່ນອກເຂດແດນລາວ ປັດຈຸບັນ ລ້ວນແລ້ວແຕ່ຮູ້ດີ ແລະນິຍົມຊົມຊອບວັນນະກຳເລື່ອງນີ້.

ທາງສະຖາບັນຄົ້ນຄວ້າສິລະປະວັນນະຄະດີ ແລະອັກສອນສາດ ໄດ້ຕົກລົງໃຫ້ມະຫາຄຳພັນສີ ຫະມົນຕີ ອະດີດສະມາຊິກຂອງສະຖາບັນພວກເຮົາກ່າຍເອົາພື້ນເລື່ອງມາຈາກວັດນາໄຊ ກຳແພງ ນະຄອນວຽງຈັນມາພິມໄວ້ ໃນຈຸດປະສົງ ຮັກສາຕົ້ນສະບັບໃນທີ່ສະມຸດຕ່າງໆ ເພື່ອນັກຄົ້ນຄວ້າແລະ ນັກອ່ານທັງຫລາຍ ໂດຍບໍ່ໄດ້ແຕະຕ້ອງເຖິງສັບຄຳເວົ້າ ແລະສຳນວນໃນສະບັບເດີມແຕ່ຢ່າງໃດ ເວັ້ນເສຍແຕ່ອັນໃດຜິດພາດໂພດ ຈຶ່ງແປງດ້ວຍຄວາມລະມັດລະວັງ. ແນ່ນອນມີຫລາຍຢ່າງໃນການ ໃຊ້ສັບໃຊ້ສຳນວນ ແລະຮູບຂອງກອນຂາດຕົກບົກພ່ອງ ແຕ່ກໍ່ບໍ່ແມ່ນຈຸດປະສົງຂອງການພິມຊຸດນີ້ທີ່ຈະ ແກ້ໄຂ. ພວກເຮົາຂໍປະວຽກປະເພດນັ້ນ ໄວ້ໃຫ້ເປັນພາລະຂອງນັກຄົ້ນຄວ້າຫລືໄວ້ໃຫ້ຄົນຮຸ່ນ ຫລັງ ພິຈາລະນາເອົາເອງ ເພາະຖ້າຍັງແຕະຕ້ອງທີ່ໃດກໍ່ຍິ່ງເຮັດໃຫ້ເນື້ອໃນຫ່າງເຫີນອອກໄປຈາກ ສະ ບັບເດີມຫລາຍທີ່ນັ້ນ. ມັນມີຄວາມລຳບາກ ສຳລັບຈະຈັດບາດກອນໃນການພິມ ເພາະຜູ້ແຕ່ງ ດັ້ງ ເດີມ ເຊິ່ງກໍ່ບໍ່ຮູ້ວ່າແມ່ນໃຜນັ້ນກໍ່ບໍ່ໄດ້ເອົາຫົວຊາໃນການຂຽນກອນໃຫ້ເປັນບາດແຕ່ປະການໃດເລີຍ ດັ່ງນັ້ນພວກເຮົາຈຶ່ງພິມກອນໃຫ້ເປັນລວາດດຽວກັນເພື່ອເຫັນແກ່ຄວາມບໍ່ນັກໃຈຂອງຜູ້ອ່ານ.

ການຈັດພິມວັນນະກຳເລື່ອງນີ້ ພວກເຮົາໄດ້ຮັບການສະໜັບສະໜູນ ໂດຍກອງທຶນ ອາຊີ The Asia Foundation ເຊິ່ງນະທີ່ນີ້ ພວກເຮົາຂໍສະແດງຄວາມຂອບໃຈເປັນຢ່າງສູງ.

ວຽງຈັນ, 7 ສິງຫາ 1990

ສະຖາບັນຄົ້ນຄວ້າສິລະປະວັນນະຄະດີ

ແລະພາສາສາດ

# ຈໍາປາສີຕົ້ນ



ບັດນີ້ຂາຈັກວັນຫາໄຫວ້ ພຸດໂທທຳດວງຍິງ
ສາມສິ່ງແກ້ວ ອີງລ້ຳໂລກລີ
ອັນວ່າເກສາຂ້າ ຈອມຫົວເກົ້າເກດ
ຂໍໃຫ້ເປັນດັ່ງດວງດອກໄມ້ ຖວາຍໄທ້ພະຍອດຄຸນ ແດ່ທ້ອນ
ກັບທັງກາຍາເນື້ອ ທູກແຫ່ງໃນຕົນ ອ້ານີ້
ຂໍໃຫ້ເປັນມາລາ ດອກດວງຖວາຍໄຫວ້
ອັນວ່າຈັກຂູຂ້າ ຄືຕາທັງຄູ່
ຂໍໃຫ້ເປັນປະທີບໄຕ້ ບູຊາເຈົ້າພະຍອດຄຸນ
ອັນວາໂຈລາຣາຍ ເວລາບັງບຽດ
ຂໍໃຫ້ຫນີຫລີກເວັ້ນ ໄກລ້ຳຈາກເວນ ແດ່ທ້ອນ
ອັນຫນຶ່ງຂໍໃຫ້ໄດ້ເກີດພ້ອມ ເມດໄຕແຫ່ງໂພທິສັດ
ສັບພະໂລຄາສັງ ຢ່າມີມາໃກ້
ອັນຫນາງຫູຂາຂໍຣ່ຳຮູ ໄຕຍະເພດປີດົກ (ເດີມພິດົກ)
ຂໍໃຫ້ມີປັນຍາ . ສ່ອງຍານໄຕແກ້ວ
ຂໍຢ່າມີໂພຍຕ້ອງ ອິນຕາຍບັງເກີດ
ສຸກຢູ່ຍ້ອນ ພຸດໂທເຈົ້າຫລື່ອມງຳ ແດ່ທ້ອນ
ບັດນີ້ມາຈັກເລົ່າຊາດທ້າວ ປາງກ່ອນໂພທິຍານ ກ່ອນແລ້ວ
ປາງເມື່ອທຽວສິ່ງສານ ບາບເວນວຽນຕ້ອງ
ຍັງມີເມືອງໃຫຍ່ກວ້າງ ຣຽກຊື່ປັນຈາ

ຊື່ວ່າພະຍາຈຸນລະນີ ສິບເມືອງແຫນສ້າງ
ມີທັງໂຮງຫຼວງກວ້າງ ທໍ່ຄຳຜາສາດ
ຄ້າຍເມກລ້ອມ ກຳແພງແກ້ວນອກໃນ
ເມື່ອນັ້ນພະບາດທ້າວ ສະຖິດແທ່ນຕຽງທອງ
ເສນາຫລາຍ ນັ່ງເມືອງແຝງເຝົ້າ
ມີທັງແສນເມືອງພ້ອມ ພາມມະນາຫລາຍຫມູ່
ມາຢູ່ເຝົ້າ ແຫນເຈົ້າຊູ່ວັນ
ອັນວ່າຊະຊ່ອນເນື້ອ ນາງນາດມະເຫສີ
ຊື່ວ່ານາງອັກຄີ ຢູ່ເຝືອແຝງເຝົ້າ
ກັບທັງນັກສະຫນົມພ້ອມ ກັນລະຍາຫລາຍຫມື່ນ
ທູກຄ່ຳເຊົ້າ ແຫນເຝົ້າຊູ່ວັນ
ມີທັງໂຍທາທ້າວ ຄົນທານມີມາກ
ຊ້າງແລະມ້າ ຄວາມປ້ອນຢູ່ໂຮງ
ເງິນຄຳແກວ ເຍັຽສາງຕັນຢູ່
ເສື້ອແລະຜ້າ ແຣລ້ວອະເນກນອງ
ພະກໍຢູ່ຊອບແທ້ ທົດສະລາດຄອງທຳ
ສົມບູນພານເຮືອງ ໄພ່ພົນຍໍຍ້ອງ
ແຕ່ນບຊາວເມືອງສ້າງ ທຳນາສວນໄຮ່
ບໍ່ຫອດໄຮ້ ຂອງເຂົ້ານັ້ງມູນ (ເດີມໂຫດໄຮ້)

ກໍ່ບໍ່ມີການຮ້ອນ ອັນໃດສັກສິ່ງ
ຝູງໄພ່ຟ້າ ເມືອງບ້ານຊຶ່ນຊົມ
ກໍທາກເຊັ່ງຊ່ຳແທ້ ປັນຈານະຄອນລາດ
ພະບາດເຈົ້າ ສະເຫວີຍສ້າງສິບເມືອງ
ກໍຈິ່ງດູນການລ້ຳ ຫລາຍປີແຖມຖ່າຍ ມາແລ້ວ
ພະບາດທ້າວທົ່ງຢູ່ສ້າງ ສະເຫວີຍລາດຍູກະເສີມ ເຈົ້າເຮີຍ
ບັເານຍຸຕິການບັ້ນ ປັນຈາໄວ້ກ່ອນ
ຖອາຍແກ່ນັກປາດເຈົ້າ ຕົນລ້ຳຮ່ຳເພິ່ງ ເຈົ້າເຮີຍ
ບັດນີ້ຈັກກ່າວເຖິງນັກຄະເລດກອ້າງ ເມືອງໃຫຍ່ທານີ ກ່ອນແລ້ວ
ຍັງມີພູບານທົ່ງ ສິບເມືອງແທນສ້າງ
ອັນວ່ານາມມະກອນເຈົ້າ ລາຊາຕົນອາດ
ຊື່ວ່າພະຍາຈັກອິນທະລາດທ້າວ ທົ່ງສ້າງສິບເມືອງ
ອັນວ່ານັກສະໜົມພ້ອມ ກັນລະຍາທີກໜື່ນ
ໜ້າຊື່ນຊ້ອຍ ແທນທ້າວປ່ຳລື
ອັນວ່າມະເຫສີແກ້ວ ເທວີທຽມບາດ
ເໝືອນດັ່ງຢາດແຕ່ຟ້າ ລົງພ້ອມພ່ຳພະອົງ
ພະກໍ່ຫົງເມືອງກອ້າງ ຈັກອິນນັກຄະເລດ
ອົງເຂດກວ້າງ ໄກລ້ຳໂຍດຍາວ
ພະກໍ່ທົດສະລາດແທ້ ຄອງແຫ່ງສິບປະການ
ສົມພຸານມີ ໄພ່ໄທຍໍຍ້ອງ
ອັນວາດເສັນາຂາ ຄົນຫານນັບໝື່ນ
ທຸກຄ່ຳເຊົ້າ ແທນເຝົ້ານັ່ງເມືອງ
ຊ້າງແລະມ້າ ອະນັນເນກເຫລືອຫລາຍ
ພົງພາຍຢູ່ຍ ຢູ່ໂຮງຄວາມປ້ອນ
ສາງເງິນມອມ ສາງຄຳຫລາຍໂກດ
ເສື້ອແລະຜ້າ ແຮລ້ອອະເນກນອງ
ຝູງໄພ່ນ້ອຍ ຊາວລາດທັດສະດອນ
ທຳຖິນສວນ ຊື່ນບານຫລາຍບ້ານ
ຊາວເມືອງສາງ ທຳນາສວນໄຮ່
ບໍ່ທອດໄຮ້ ຂອງເຂົ້າມັ່ງມູນ (ເດີມໂທດໄຮ້)
ມີທັງ ເສດຖີພ້ອມ ພານມະນາຫລາຍສ່ຳ
ທຸກຄ່ຳເຊົ້າ ຍູ້ຄ້າແລະຂາຍ
ຄົນເຫຼືອລົ້ນ ເຕັມເມືອງທຸກແຫ່ງ
ຕັ້ງຕະຫລາດໄວ້ ຂອງເຂົ້າມັ່ງມີ (ເດີມຂອງເຄົ້າ)
ບໍ່ທອດໄຮ້ ທຸກສິ່ງໂພຄາ (ໂທດໄຮ້)
ຫລາຍພາສາ ສ່ວຍໄຮລີໄຮ້
ພະກໍ່ຫົງເມືອງໄດ ຫລ່າຍປີນານມາກ
ກໍຈິ່ງມີນາດເນື້ອ ນາງແກ້ວລູກຍິງ

ຊື່ວ່າປະທຸມມານ້ອຍ ງາມປານພະອິນຫລໍ່
ພະພໍ່ເຈົ້າ ແພງນ້ອຍເກີ່ງຕາ
ກໍທາກລືຊາແທ້ ທັງເມືອງເຊັ່ງຊ່າ
ຜົ່ງເຜົ່າໜ້າ ປານແຕ້ມແຕ່ພົມ
ຄົງກົມສວ້າຍ ທະນູທອງເຫລົາຫລໍ່
ເປັນໜໍ່ເຊື້ອ ຈັກອິນກວ້າງຍອດຍິ່ງ ແທ້ແລ້ວ
ອັນວ່າພະພໍ່ເຈົ້າ ໃຫ້ແຕ່ງທີ່ປາງ
ເອົານາງຄານ ຢູ່ທີ່ປາງແກ້ວ
ດູນານໄດ້ ຫລາຍປີເດືອນດັບຖ່າຍ ມາແລ້ວ
ສິບຫ້າເຂົ້າ ງາມລົ້ນລື່ນຂຽນ
ນາງກໍເນົາໃນຫ້ອງ ທີ່ປາງພາສາດ
ທຸກຄ່ຳເຊົ້າ ທຮອເຝົ້າພໍ່ຕົນ ແທ້ແລ້ວ
ແຕ່ມື້ນຕາວັນເຂົ້າ ເຂົ້າຫອງຍາມຄ່ຳ
ພະຈິ່ງໄສຍາດເຍື້ອນ ໃນຫ້ອງແທ່ນທອງ
ເຈົ້າກໍເນົາໃນຫ້ອງ ທີ່ຄ່ຳຄຶດຮ່ຳ (ເດີມຄຶດຄ່ຳ)
ຫລັບຊວດຊ້ອຍ ໃນຜ້າຊື່ວຍາມ
ພະກໍນິມິດແທ້ ຍັງແຫ່ງຄຳຝັນ
ວ່າສູລິຍະຄາດເຂົ້າ ມືອມືດສູນແສງ
ຄວັນບົນບົດ ມືດມົວມິແຈ້ງ
ຝັນວ່າເທໂວຟ້າ ຕົກລົງຮ່ຳແຜ່ນ
ເປັນແມ່ນ້ຳ ນອງຖ້ວມຖ່ມເມືອງ
ອັນໜຶ່ງຝັນວ່າຜາສາດປັ້ນ ທັກທ່າລົງດິນ
ໃນນັດທີຫລວງ ຈຸ່ມຈົມວັງກວ້າງ
ຝັນວ່າໂຍທາພ້ອມ ຊາວເມືອງພົນໄພ່
ເຂົາກໍລອຍບໍ່ພົ້ນ ຈົມນ້ຳກຸ່ມກອງ
ກັບທັງຊ້າງແລະມ້າ ມູດມອດໃນນັດທີ
ທັງງົວຄວາຍ ຈຸ່ມຈົມລົງນ້ຳ
ກໍບໍ່ຫລີຍັງຄ້າງ ໝູໝາເປັດໄກ່
ມູດມອດມ້ຽນ ໝົດສຽງບໍ່ຫລໍ
ອັນໜຶ່ງຝັນວ່າຕົນອົງເຈົ້າ ລາຊາຈົມຈຸ່ມ
ຝັນວ່າໄສ້ຢູ່ຫ້ອງ ຟູຂຶ້ນຮອດບົນ
ແລ້ວຈິ່ງຝັນເຫັນຕົນບຸນເຈົ້າ ທົ່ງທຳວິເສດ
ຈັບຈ່ອງນົວ ເອົາທ້າວບໍ່ນານ
ອັນວ່າຄູງຄານນ້ຳ ເລີຍຫາຍບົກວາບ
ພະອາທິດເຈົ້າ ສະເດັດດັ້ນດ່ອນລົງ
ມາເຖິງຫ້ອງ ໂຮງຫລວງພະບາດ
ແສງສ່ອງແຈ້ງ ເມືອງບ້ານຊູ່ພາຍ
ແຕ່ມື້ນລາຊາເຈົ້າ ຕົງຕົນສະດຸ້ງຕື່ນ

ຟັງຍິນສຽງໄກ່ຜູ້ ຂັນຂຸ້ນທົ່ວເມືອງ
ແຕ່ນັ້ນພະບາດທ້າວ ລຸກອາບສົງສີ
ຈັນມັນອົບ ອາບອົງຫອມເຮົ້າ
ເຈົ້າຈິງຄຶດຮ່ຳຮູ້ ຄະນຶງແຫ່ງຄຳຝັນ
ພະຈິງທັນໝໍທວາຍ ຮີບມາມິຊ້າ
ແຕ່ນັ້ນພາມມະນາເຖົ້າ ເຄີຍທວາຍຄີ້ວແມ່ນ
ຂຶ້ນເຝົ້າເຈົ້າ ບຸນກວ້າງບໍ່ນານ
ແຕ່ນັ້ນພະບາດເຈົ້າ ພາຍອາດອາຈາ
ດູລາໝໍ ຈຶ່ງທວາຍດູໃຫ້ພ້ຽມ
ໃນຄືນນີ້ ກູພະອົງຝັນຫລາກ
ພະຈິງເລົ່າພາກຖ້ອຍ ດູແຈ້ງຊູ່ອັນ
ທ່ານຈຶ່ງທວາຍດູແທ້ ຕາມຄູສອນສັ່ງ
ຈັກຊິເປັນເຫດຕ້ອງ ກູແທ້ສິ່ງໃດ ນີ້ເດ (ເດີມກິເປັນ)
ແຕ່ນັ້ນໝໍກໍບາຍສໍຕ້ອງ ກະດານຫີນຂຽນຂີດ
ວົງວາດໄວ້ ກົງແກ້ວຫລ່ຳດູ
ຕາມຄູເຖົ້າ ອາຈານສອນສັ່ງ
ສູນແປດຖານ ເມືອງບ້ານຫລົ່ມຫລວງ
ເຂດຂວງເຂົ້າ ຕັ້ງເມືອງເຄາະໃຫຍ່
ຈັກເສັຽພະບາດໄທ້ ເມືອງບ້ານມອດວາຍ (ເດີມຈັກກິເສັຽ)
ຄັນວ່າທວາຍໄປແທ້ ຕາມເກນຄູກ່າວ ມານັ້ນ
ຍັງຈັກເສັຽທ່ອນທ້າວ ເມືອງບ້ານມອດຈົມ ແທ້ແລ້ວ (ເດີມຈັກກິເສັຽ
ແຕ່ນັ້ນໝໍໂທນເຖົ້າ ຍໍມືທູນບາດ
ເລົ່າພາກໄຫວ້ ຈອມໄທ້ຊູ່ປະການ
ແລ້ວຈຶ່ງລາລົງຫ້ອງ ໂຮງຫລວງພະບາດ
ມາຮອດຫ້ອງ ເຮືອນຢ້າວແຫ່ງຕົນ
ເມື່ອນັ້ນພະບາດເຈົ້າ ຄະນຶງໂສກໂສກາ
ກໍຈຶ່ງທັນເສນາ ຊູ່ກົມມາພ້ອມ
ແຕ່ນັ້ນຊຸມຫລວງພ້ອມ ແສນເມືອງທຸກໝູ່
ຂຶ້ນເຝົ້າເຈົ້າ ບຸນກວ້າງຢູ່ຊະລອນ
ແຕ່ນັ້ນພະບາດທ້າວ ໄຂຂ່າວຂີຍາ
ຕາມຄຳຝັນ ຊູ່ອັນດູຖ້ວນ
ອັນວ່າເຮົາພະອົງເຈົ້າ ທໍ່ບັນຄືນຮຸ່ງ ມານີ້
ຝັນຫລາກແທ້ ພໍໃກ້ຮຸ່ງຈວນ
ເຮົາຈຶ່ງໄປທັນເຖົ້າ ໝໍໂທນທວາຍເຫດ
ໝໍກ່າວທ້ວງ ເມືອງບ້ານຫລົ່ມຫລວງ ວ່າອັນ
ວ່າຈັກເສັຽສູນເສົ້າ ເມືອງເຮົາມູດມອດ
ໝໍວ່າເຄາະໃຫຍ່ເຂົ້າ ເມືອງບ້ານມອດວາຍ
ກໍຈັກຕາຍເສັງສຽງ ທັງເມືອງສູນເປົ່າ (ເດີມຈັກກ່າວເສັຽສຽງ)

ວັດເກົ່າຮ້າງ ໂຮງເສົ້າໝົ່ນໝອງ ວ່າອັນ(ເດີມວັດເວົ່
ສົນໃດແທ້ ຊິຫາຍໂພຍເຄາະໃຫຍ່
ຈິງຈັກພົ້ນເຫດຮ້າຍ ຫາຍສຽງຢູ່ເຢັນ ນີ້ຈາ
ແຕ່ນັ້ນເສນາເຖົ້າ ທັງປວງນ້ອຍໃຫຍ່
ກໍຈຶ່ງນົບນອບໄຫວ້ ທູນໄທ້ພະຍອດເມືອງ
ອັນວ່າໝໍທວາຍເຖົ້າ ເຄີຍທວາຍຄີ້ວແມ່ນ
ແຕ່ກ່ອນກີ້ ເຫັນແຈ້ງຊູ່ອັນ ແທ້ແລ້ວ
ສົນໃດນໍ ເມືອງເຮົາຊິສູນເປົ່າ (ເດີມກິສູນ)
ອັນວ່າເຂົ້າແລະນ້ຳ ເຫລືອລົ້ນມາກມູນ
ອັນວ່າເຫໂວຟ້າ ຝົນບໍ່ໂຮຍຮ່ຳແຜ່ນ ດັ່ງນັ້ນ
ຄັນວ່າຟ້າຫາກແລ້ງ ເມືອງບ້ານຊູ່ພາຍ
ຄົນຮ່ຳສ້າງ ທຳສວນນາໄຮ່
ສາມຂວບເຂົ້າ ປີແທ້ກໍບໍ່ຕາຍ ພະເຮີຍ
ເພື່ອວ່າລາຊາເຈົ້າ ທົງທຳທົດສະລາດ
ເຂົ້າເປືອກລົ້ນ ເຕັມແທ້ຊູ່ສາງ
ອັນວ່າຊາວເມືອງພ້ອມ ທຳນາທຸກແຫ່ງ
ແຫ່ງໃດເຂົ້າກໍລົ້ນ ເຫລືອແທ້ມາກມູນ ພະເຮີຍ
ຮູ້ວ່າຈັກເປັນເຂັນຂ້ອງ ອົດຕາຍປາງຫ່າ
ບໍ່ທ່ອນມູດມອດມ້ຽນ ໝົດແທ້ຊູ່ຄົນ ນີ້ນາ
ສັ່ງວ່າໝໍທວາຍຕ້ານ ເມືອງເຮົາຊິວິນາດ
ຮູ້ວ່າເສິກຕ່າງທ້າວ ຊິມາເຂົ້າຍາດເມືອງ
ເຮົາບໍ່ເຄືອງຄຳຮ້ອນ ເມືອງໃດຊິຊີງຍາດ
ອັນວ່າພົນໄພ່ຟ້າ ເມືອງນີ້ອະເນກນອງ
ໃພ່ບໍ່ອາດຈະປອງເຂົ້າ ເມືອງເຮົາເທຍາດ ໄດ້ແລ້ວ
ຂໍໃຫ້ພະແກ່ນແກ້ວ ບຸນກວ້າງຮ່ຳຄະນຶງ ພະເຮີຍ
ແຕ່ນັ້ນພະບາດທ້າວ ຕ້ານຕໍ່ເສນາ
ເຮົາບໍ່ກົວເກງສັ່ງ ແຕ່ໂຈນມານຮ້າຍ
ອັນວ່າເສິກເສືອກ້ຳ -ເມືອງໃດຊິຊີງຍາດ
ເຮົາກໍບໍ່ອາດຮ້ອນ ເຄືອງແຄ້ນເຍືອງໃດ
ກົວແຕ່ເປັນເຂັນຂ້ອງ ໃນເມືອງຕາຍຫ່າ
ອັນແຕ່ເສິກຜ່າເຂົ້າ ເມືອງບ້ານຢ່າກົວ ທ່ານເຮີຍ
ຄວນທີ່ເຮົາທຳສ້າງ ສິນທານຍາຂາດ
ຄັນວ່ານໍລະນາດມ້ຽນ ຕາຍແທ້ກໍບໍ່ແໜງທ່ານເຮີຍ
ສູຈຶ່ງໄປທຳສ້າງ ສາລາທານທີກແຕ່ງ
ຈຶ່ງໃຫ້ຕົກແຕ່ງພ້ອມ ຂອງເຂົ້າເຄືອງທານ
ກູຈັກເທທານໃຫ້ ຊາວເມືອງທຸກແຫ່ງ
ຝູງໝູ່ຄົນຂະໜອດໄຮ້ ຍໍໃຫ້ທອດທານ
ເສື້ອຜ້າພ້ອມ ໂພຊະນະອາຫານ

| | |
|---|---|
| ເຮົາຈັກເອົາເທຫານ | ແກ່ຄົນຝູງໄຮ້ |
| ກັບທັງເດັຽລະສານພ້ອມ | ນາໆຫລາຍສິ່ງ |
| ເຮົາຈັກເທທອດໃຫ້ | ທານແທ້ຊູ່ຕົວ ແທ້ແລ້ວ |
| ແຕ່ນັ້ນເສນາພ້ອມ | ຍໍມືບບາດ |
| ໂດຍອາດເຈົ້າ | ບຸນກວ້າງທີເຊັ້ງ |
| ເອົາກໍໄປທຳສ້າງ | ສາລາທົກແຫ່ງ |
| ພະກໍເຕີມແຕ່ງໃຫ້ | ທານແທ້ຊູ່ວັນ |
| ອັນວ່າອາຫານພ້ອມ | ໂພຊະນັງຫລາຍສິ່ງ |
| ເສື້ອແລະຜ້າ | ທານພ້ອມຊູ່ວັນ |
| ກັບທັງເດັຽລະສານພ້ອມ | ນາໆສັດສິ່ງ |
| ເຂົ້າເປືອກພາຍຫວ່ານໄວ້ | ທານໃຫ້ຊູ່ຕົວ |
| ຝູງຫມູ່ຫມູນົກພ້ອມ | ສັດສິ່ງເດັຽລະສານ |
| ປາຍທານໄປ | ທຸກວັນຈິງແທ້ |
| ເຫິງນານໄດ້ | ຫລາຍວັນມີມາກ |
| ຝູງຫມູ່ຄົນຂະຫມອດເຂົ້າ | ສາລາກວ້າງຊູ່ວັນ ແທ້ແລ້ວ |
| ບັດນີ້ຍຸດຕິກາບັ້ນ | ຈັກອິນເມືອງໃຫຍ່ ໄວ້ກ່ອນແລ້ວ |
| ຈັກຈີກ່າວຮອດຮູ້ງ | ຕົວຮ້າຍຍັກເຢັນກ່ອນແລ |
| ບັດນີ້ຈັກກ່າວເຖິງເສໂນເຈົ້າ | ພະຍາຫລວງຮູ້ງໃຫຍ່ ກ່ອນແລ້ວ |
| ມັນກໍເນົາຢູ່ຫ້ອງ | ດອຍກວ້າງກວ່າໄກ |
| ໃນໄພກວ້າງ | ຄີລີອົງຍະມາດ |
| ມັນກໍເປັນຊາດເຊື້ອ | ພະຍາຮູ້ງຍັກເຢັນ |
| ຕົວໃຫຍ່ແທ້ | ປະມານທໍ່ພູດອຍ |
| ເນົາຈອມເຂົາ | ພໍ່ນານຈິງແທ້ |
| ອັນວ່າເສໂນຮູ້ງ | ຜົວເມັຽທັງຄູ່ |
| ມັນກໍມີຫນ່ອຍແກ້ວ | ຍອງຕັ້ງຢູ່ຫົວ |
| ທັງຜົວເມັຽ | ຄູ່ກັນຈິງແທ້ |
| ອັນວ່າຮຶງໆເຫລື້ອມ | ມະນີໂຊທັງຄູ່ |
| ກໍຫາກດູເລີດລ້ຳ | ຄວນແທ້ຄ່າເມືອງ |
| ມັນບໍ່ກົວເກງຢ້ານ | ຜີສາງຍັກໃຫຍ່ |
| ເພື່ອວ່າມີຫນ່ອຍແກ້ວ | ດວງລ້ຳໂລກລ |
| ມັນກໍເນົາໃນຫ້ອງ | ຄີລີອົງຍະມາດ |
| ມັນກິນຫມູ່ສັດສິ່ງເນື້ອ | ໄພກວ້າງຊູ່ວັນ |
| ກິນທັງຫມີເຫມືອຍພ້ອມ | ງົວກະທິງແຮດໃຫຍ່ |
| ຝູງຫມູ່ສັດສິງຊ້າງ | ກິນສ້ຽງບໍ່ຫລໍ |
| ກໍຈິ່ງເລີຍຫມົດສ້ຽງ | ຝູງສັດໃນປ່າ |
| ມັນກໍນອນຢູ່ລ້າ | ຫິວທ້ອງແສບພຸງ |
| ມັນຈຶ່ງປາກກ່າວຕ້ານ | ຈາຕໍ່ຕົວເມັຽ |
| ເຮົາຈັກເອົາອາຫານ | ທີ່ໃດກິນແທ້ |

| | |
|---|---|
| ກໍຫາກດັບຫມົດສ້ຽງ | ຝູງສັດໃນປ່າ |
| ເຮົາຈັກໄປຄວ່າດ້າວ | ກິນແທ້ທີ່ໃດ ນໍເດ |
| ຮານລອນທໍ່ມີຫນ່ອຍແກ້ວ | ກໍມາເກີດເປັນສັດ ນໍ້ນໍ |
| ເວນກຳມີ | ແຕ່ຫລັງຈິງແທ້ |
| ຮາຈິງຮັກສາແກ້ວ | ດວງດີລູກປະເສີດ |
| ນານຍິ່ງລ້ຳ | ຈິງແທ້ຫນ່ວງຫນາ |
| ປານໃດເດຈິງຊິເຫັນລາຊາເຈົ້າ | ທົງທຳລິດທີມາກ |
| ເອົາຫນ່ອຍແກ້ວ | ຖວາຍເຈົ້າທີເຊິງ ນໍ້ນໍ |
| ແຕ່ນັ້ນພະລັຍາຮູ້ງ | ຕົວເມັຽເລີຍກ່າວ |
| ຮາກໍອົດຢາກລ້ຳ | ຫລາຍມພໍ່ນານ ແທ້ແລ້ວ |
| ຮາຈິງບິນໄປກ້ຳ | ເມືອງຄົນມະນຸດຕ່າງ |
| ລອນວ່າຍັງມີຜູ້ອາດອ້າງ | ລິດທີ່ກ້າກວ່າເຮົາ ດັ່ງນັ້ນ |
| ຮາຈຶ່ງເອົາຍັງແກ້ວ | ມະນີໂຊຖວາຍມອບ |
| ຮາຈຶ່ງລົດຊົວຊ້ຳ | ຕາຍໃຫ້ສວ່າງເວນ |
| ຄັນວ່າເອົາບໍ່ມີລິດທີແທ້ | ເຮົາກິນເປັນເຫຍື່ອ ຈິງເທີ້ນ |
| ແຕ່ນັ້ນຜົວກ່າວຕ້ານ | ດີແລ້ວຊອບເຊິງ ເຈົ້າເຮີຍ |
| ຜີວ່າເຮົາຢູ່ຄ້າງ | ດອຍໃຫຍ່ຄີລີ ທີ່ນີ້ |
| ກໍບໍ່ມີອາຫານ | ເວດທະນາຈິງແທ້ |
| ເພື່ອວ່າມະນີໂຊດແກ້ວ | ຕັ້ງບິນຫົວເຮົາຢູ່ |
| ຕາຍກໍຕາຍບໍ່ໄດ້ | ມາໃຊ້ຢູ່ນານ ແທ້ແລ້ວ |
| ແຕ່ນັ້ນຜົວເມັຽຕ້ານ | ຄຳດຽວວ່າຊອບ |
| ກໍຈຶ່ງບິນເຜີນຜ້າຍ | ພາຍລ້ຳລ່ວງໄປ |
| ມັນກໍແຍງຫົນກ້ຳ | ຈັກອິນເມືອງໃຫຍ່ |
| ກໍຈຶ່ງເຖິງເຂດດ້າວ | ແດນບ້ານປະເທດຄົນ |
| ມັນຫລິງເຫັນງົວຄວາຍພ້ອມ | ທັງຄົນບ້ານນອກ |
| ຮູ້ງບໍ່ຊ້າ | ກິນສ້ຽງບໍ່ຫລໍ |
| ແຕ່ນັ້ນຝູງເຂົາອ້າ | ຄາເມບ້ານນອກ |
| ເລີຍຕື່ນຢ້ານ | ໂຕນຟ້າວພ່າຍພັງ |
| ລາງຄົນເຂົ້າປ່າໄມ້ | ຊົ້ນຫລີບຫີນຜາ |
| ລາງຄົນໂຕນຊຸງຄາ | ລອດດຳລົງນ້ຳ |
| ລາງຄົນຟ້າວ | ລົງເຮືອນປີບແລ່ນ |
| ມາສູ່ຫ້ອງ | ເມືອງກວ້າງທີເຊິງ |
| ແລ້ວຈິງຂົ້ນເຝົ້າເຈົ້າ | ພະລາດຊະແສນເມືອງ |
| ແຫນຄຳຄວນ | ຊູ່ອັນເອົາຕ້ານ |
| ບັດນີ້ມີການຮ້ອນ | ອິນຕາຍບັງເກີດ ຈິງແລ້ວ |
| ຍັງມີຮູ້ງໃຫຍ່ຮ້າຍ | ບິນເຂົ້າສູ່ເມືອງ |
| ມັນກໍກິນຄົນສ້ຽງ | ຄາເມບ້ານນອກ |
| ຫມົດຖ້ອງບ້ານ | ກິນສ້ຽງບໍ່ຫລໍ ແທ້ແລ້ວ |

ແຕ່ນັ້ນແສນເມືອງທ້າວ　ໄດ້ຍິນຄຳເຂົາບອກ
ກໍຈິ່ງຮີບຟັ່ງຟ້າວ　ເມືອເຝົ້າບາດຄຳ
ແລ້ວຈິ່ງຍໍມືໄຫວ້　ຈອມເມືອງພູວະນາດ
ກົ້ມຂາບໄຫວ້　ທູນເຈົ້າກ່າວກອນ
ບັດນີ້ເຂັດຂວງເຂົ້າ　ແດນເມືອງບ້ານນອກ ພະເຣີຍ
ເຂົາຈິ່ງເຂົ້າ　ມາເວົ້າຂ່າວການ
ຍັງມີເສໂນຣັງ　ຜົວເມັຽຕົວໃຫຍ່
ບິນລ່ວງເຂົ້າ　ເມືອງບ້ານແຫ່ງເຮົາ ພະເຣີຍ
ມັນກໍກິນຄົນສັຽງ　ຄາເມບ້ານດ່ານ
ມຸດມອດມ້ຽນ　ເສັຽສັຽງບໍ່ຫລໍ່
ເຂົາກໍວາງເສັຽຢ້າວ　ທັງເຮືອນສວນຖິ່ນ
ປະໄປໄວ້　ເຮືອນຢ້າວເປົ່າດາຍ ພະເຣີຍ
ແຕ່ນັ້ນພະບາດທ້າວ　ໄດ້ຍິນຂ່າວຂີຍາ
ລາຊາພະ　ຄຶງທວງເລີຍແຄ້ນ
ແຕ່ນັ້ນພະຈິ່ງທັນພາພ້ອມ　ຝູງໝູ່ເສນາ
ມາພະລັນເປື້ອງ　ຊູ່ພາຍມວນພ້ອມ
ພະຈິ່ງປາກກ່າວຕ້ານ　ຈາໝູ່ເສນາ
ເຮົາຈັກທຳສັນໃດ　ຈິ່ງຈິຄວນຈິ່ງແທ້
ອັນນີ້ມໃຊ່ເສິກເສືອເຊື້ອ　ນານຄົນສະເໜີພາກ ກັນນາ
ເຮົາຈັກລົບຕໍ່ສູ້　ມັນໄດ້ສິ່ງໃດ ນໍ້ຈາ
ແຕ່ນັ້ນເສນາພ້ອມ　ມູນຕິນ້ອຍໃຫຍ່
ກົ້ມຂາບໄຫວ້　ທູນເຈົ້າພະຍອດເມືອງ
ອັນແຕ່ເສໂນຣັງ　ເດັຽລະສານສັດຖ່ອຍ
ມັນຈັກຕັ້ງຕໍ່ສູ້　ເຮົາໄດ້ດີງລື ນໍ້ເດ
ຝູງຂ້າຂໍອາສາແທ້　ຕາງອົງພູວະນາດ
ອັນນີ້ທຳມະຊາດເຊື້ອ　ສັດແທ້ກໍບໍ່ກົວ ພະເຣີຍ
ມັນຈັກມາຫົນສູ້　ປີນຫລວງນ້ຳມອກໃຫຍ່ ເຮົາລີ
ສູ່ຈິ່ງປຸ່ນເປື້ອງທ້າງ　ເຕີນກັນທຸກແຫ່ງ
ຕົກແຕ່ງທ້າງ　ມວນພ້ອມຊູ່ພາຍ ທ່ຽວເຫັນ
ແຕ່ນັ້ນຂຸນກໍໂດຍຄຳເຈົ້າ　ລາຊາມີອາດ
ນົບນອບນົວ　ລາເຈົ້າລວດຄົງ
ມາເຖິງຫ້ອງ　ທໍສະໜາມເລີຍກ່າວ
ບອກໄພ່ຟ້າ　ເມືອງບ້ານຊູ່ພາຍ ແທ້ແລ້ວ
ແຕ່ນັ້ນໂຍທາທ້າວ　ດາເປືອງຕົກແຕ່ງ
ທຸກສ່ຳອ້າ　ມາພ້ອມຊູ່ຄົນ
ເຂົາກໍນອງກັນເຂົ້າ　ວຽງຫລວງຄັບຄັ່ງ
ໄຫລຫລັ່ງເຂົ້າ　ສະໜາມກວ້າງນີນັ້ນ
ກໍຫາກດູຫລາຍລົ້ນ　ພົນຫລວງຫລາຍໝື່ນ
ກັບທັງຊ້າງແລະມ້າ　ສະຖຽນຮ້ອງຊູ່ພາຍ
ເຂົາກໍຢາຍກັນຕັ້ງ　ເປັນແຖວຖັນຖີ່
ຂຸນຈິ່ງຢາຍລະມອກພ້ອມ　ປີນໃຫ້ຊູ່ຄົນ ແທ້ແລ້ວ
ແຕ່ນັ້ນເຖິງຍາມໄດ້　ມະຫາໄຊດູປອດ
ຄ້ອນໄຫ່ຄ້ອງ　ສຽງທ້າວປ່າວພົນ
ແຕ່ນັ້ນຍິດງຍ້າຍ　ປະຄືອອກອວານທາງ ແລເຢີ
ພົນຫລວງຫລາຍ　ຫລັ່ງໄປປານນ້ຳ
ຟັງຍິນຄືນງກ້ອງ　ກອງໃຫຍ່ຈັດພົນ ພຸ້ນເຢີ
ຫລິງດູໂຍທາຫານ　ອອກພົນທົວໜ້າ
ອັນວ່າພົນຫານທ້າວ　ຖືປືນໄປກ່ອນ
ບໍ່ຮູ້ກີສ່ຳທ້າວ　ເຫລືອລົ້ນອະເນກນອງ
ສຽງໂຮຮ້ອງ　ທັງກອງມວນມີ
ຂຸນໃຫຍ່ຂຶ້ນຂີ່ຊ້າງ　ຕົວກ້າຂຶ້ນພົນ
ສິນງຂວ້ານ　ນາພຽງທົ່ງໃຫຍ່
ຂວ້ານດ່ານດ້າວ　ເຖິງເທົ້າຂອບເມືອງ
ກໍຈິ່ງຕັ້ງທັບໄວ້　ຄ້າຍໃຫຍ່ຄູວຽງ
ດູຍາວສຸດ　ຊື່ວຕາເຕັມຢ້ຽມ
ຂຸນກໍເຕີນເຂົາໃຫ້　ຫານປືນລະມອກໃຫຍ່
ຍົກກ່າຍໄວ້　ປາຍຊີ້ສູ່ບິນ
ກໍຈິ່ງເຕີນປ່າວໃຫ້　ທຸກໝູ່ໂຍທາ
ດາປືນໄຟ　ແຕ່ງຍໍແຍງໄວ້
ຄັນວ່າເສໂນຣັງ　ຕົວຫລວງບິນຮອດ ເຮົານັ້ນ
ສູ່ຈິ່ງຟັງສຽງຄືນງກ້ອງ　ກອງທ້ວງຈິ່ງຍິງ
ຂຸນກໍເຕີນກັນໄວ້　ໂຍທາທຸກໝູ່
ທຸກເຄື່ອງທ້າງ　ດາໄວ້ຊູ່ຄົນ ແທ້ແລ້ວ
ບັດນີ້ຈັກກ່າວເຖິງເສໂນຣັງ　ຜົວເມັຽຕົວໃຫຍ່ ກ່ອນແລ້ວ
ມັນກໍບິນເຜີນຜ້າຍ　ພາຍລຸ້ລ່ວງມາ
ມັນກໍຫລິງເຫັນໂຍທາທ້າວ　ຈັກຂິນເມືອງໃຫຍ່
ເດັຽລະດາດລົ້ນ　ເຕັມຄ້າຍອະເນກນອງ
ແຕ່ນັ້ນເສໂນຣັງ　ຈາເມັຽຊົມຊື່ນ
ຮາຈັກລູລາບລົ້ນ　ຈິ່ງແທ້ກວ່າຫລັງ
ແຕ່ນັ້ນຕົວເມັຽຕ້ານ　ຂານຜົວຊົມຊື່ນ
ນ້ອຍບໍ່ຊ້າ　ບິນຜ້າຍລ່ວງມາ ແທ້ແລ້ວ
ແຕ່ນັ້ນຝູງໝູ່ໂຍທາຢ້ຽມ　ຄອຍເຫັນຕົກຄະນ່າ ໃຈແລ້ວ
ຕົວໃຫຍ່ແທ້　ປະມານດ້ານທໍ່ພູ
ຫລິງດູຕາແດງເຂັ້ມ　ສະເໜີໄຟເຕົາໃຫຍ່
ຫລິງດູປີກແຜ່ກຸ້ມ　ຕາວັນໄວ້ມືດມົວ
ແຕ່ນັ້ນເຂົາກໍໜົວງຮ້ອງ　ທັງວຽງຄັບຄັ່ງ

ລາງຄົນໄຫ້ຍີງຍ້ອຍ ກົວຢ້ານສິ້ນສາຍ
ແສນເມືອງພ້ອມ ຊຸມນາຍຖ້ານໃຫຍ່
ຄ້ອນໄຫ່ຄ້ອງ ກອງພ້ອມຄືນເຄັງ
ແຕ່ນັ້ນເຂົາກໍຍິງປືນພ້ອມ ທະນູຫລວງເຝືອນຟັງ
ສຽງຄືນເຄົ້າ ວຽງກວ້າງອູ່ພາຍ
ຄວັນດິນກົ້ວ ເມືອບິນບຶດມືດ
ລູກປືນເລີຍຫລີກເວັ້ນ ໄກຮຸ້ງບໍ່ຖອງ
ກໍເພື່ອເຕໂຊແກ້ວ ມະນີໂຊດວງປະເສີດ
ຮຸ້ງກໍບໍ່ປ່ອນຢ້ານ ຈິງແທ້ທໍ່ໄຍ
ມັນຈິງໄຂຄຳຕ້ານ ວາຈາຮ້ອງກ່າວ
ສູຈັກເປັນເຫຍື່ອທ້ອງ ກູແທ້ບໍ່ສົງ
ສູນີ້ເຄີຍມາແທ້ ອາໂລເປັນເຫຍື່ອ ກູແລ້ວ
ສູຈັກດັບມອດມ້ຽນ ທັງຄ້າຍຈຸ່ມຈົມ ຫັ້ນແລ້ວ
ກູຈັກກິນຫາຜູ້ ມີບຸນລິດທິມາກ
ໃຜຜູ້ຍັງພາບແພ້ ຈິເອົາແກ້ວມອບຖວາຍ
ຄ້ອມວ່າຮຸ້ງກ່າວແລ້ວ ຜັດດ່ວນລົງມາ
ຈັບເອົາຄົນ ຈິກກິນມີຊ້າ
ແຕ່ນັ້ນເຂົາກໍຫົມໆຮ້ອງ ໃນວຽງຄ້າຍໃຫຍ່
ຮຸ້ງກໍຈັບໂຮບໄດ້ ທີຮ້ອຍຈິກກິນ
ແຕ່ນັ້ນພົມຫລວງທ້າວ ໂຍທາແຕກຕື່ນ ໄປແລ້ວ
ລາງຄົນໂຕນຈາກຊ້າງ ປົບຟ້າວແລ່ນຫນີ
ເຂົາກໍໄລວາງຖົ້ມ ເສັຽປືນງ້າວຫອກ
ປົບຟັງຟ້າວ ໄປຊົ້ນພຸ່ມເຝືອຍ
ບາງພ່ອງໄປຊິນໄມ້ ຫລັກຕໍ່ລົ້ມທ່າວ
ເພື່ອວ່າດູມິດພົ້ນ ເຊລົ້ມທ່າວຕາຍ ແທ້ແລ້ວ
ແຕ່ນັ້ນເສນາພ້ອມ ມູນຕີເສັຽເກີງ
ຝູງໄພ່ຟ້າ ຕາຍແທ້ຜ່າສາມ
ອັນວ່າເສໂນຮຸ້ງ ກິນຄົນຫມົດມາກ
ມັນຈິງຄາຍຄູກໄວ້ ສູງຂົ້ນທໍ່ພູ
ຮຸ້ງຈິງປາກກ່າວຕ້ານ ຮ້ອງສັ່ງຊາວເມືອງ
ສູຈັກເປັນອາຫານ ແຫ່ງກູຫມົດສັ້ຽງ
ເຖິງເມື່ອເຈັດວັນແລ້ວ ກູຈັກຄືນມາເລົາ
ສູຈັກເຂົ້າສູ່ທ້ອງ ກູນີ້ຊູ້ຄົນ ແທ້ແລ້ວ
ຄ້ອມວ່າແລ້ວ ມັນເລົາບິນຫນີ
ເຖີງຄີລີ ປາດອຍດົງກ້ວາງ
ມັນກໍຢູ່ສະບາຍແທ້ ເນົານອນດອຍໃຫຍ່
ເພື່ອວ່າກິນອີ່ມທ້ອງ ບໍ່ມີຮ້ອນຮ່ຳເຄືອງ ແທ້ແລ້ວ
ບັດນີ້ຈັກກ່າວເຖີງເສນາພ້ອມ ໂຍທາພວກໄພ່

ຝູງຫມູ່ເຫລືອປາກຮຸ້ງ ຄືນເຂົ້າສູ່ເມືອງ
ເຂົາຈິງເມືອທູນໄຫວ້ ລາຊາຕົນອາດ
ເມື່ອນັ້ນພະບາດທ້າວ ເລີຍຄ້ອຍຄຶງຫວງ
ກໍຫາກເສັຽຫມູ່ຊຸມຫລວງພ້ອມ ໂຍທາທັງໄພ່ ຈິງນໍ
ຫນໍໂຫນຫວາຍກ່າວໄວ້ ດູຄ້ວສິງເຫັນ ແທ້ນໍ
ມັນຈັກເປັນເຂັນຂ້ອນ ໃນເມືອງວິນາດ
ພະບາດທ້າວ ຍິນແຄ້ນຄຶງຫວງ
ພະຈິງຈາຕໍ່ຊຸມຫລວງເຖົ້າ ເສນາຖ້ານແກ່
ເຮົາຈັກດັບມອດແທ້ ທັງຂ້າໄພ່ພົນ
ຈັກຈິມີຄົນໃດແທ້ ອາສາຮົບຕໍ່ ມັນນັ້ນ
ສູຈິງຕິປາວຄ້ອງ ໄປແທ້ທົ່ວເມືອງ
ໃຜຈັກຂັນອາສາແທ້ ໄປເລວຮຸ້ງໃຫຍ່
ກູຈັກຖວາຍມອບບ້ານ ເມືອງໃຫ້ແກ່ມັນ ແທ້ແລ້ວ
ເມື່ອນັ້ນເສນາທ້າວ ໂດຍຄວາມພະບາດ
ເຂົາກໍຕ່າງຄາດຊ້າງ ຕີຄ້ອງປາວໄປ
ໃນຫົນຫ້ອງ ກົງເມືອງທຸກແຫ່ງ
ກໍບໍ່ມີຜູ້ຂັນອາດອ້າງ ລິດທີກ້າຕໍ່ເລວ
ເຂົາຈິງຄືນມາໄຫວ້ ລາຊາພູວະນາດ
ຝູງຂ້າໂດຍອາດເຈົ້າ ຕີຄ້ອງທົ່ວເມືອງ
ກໍບໍ່ມີໃຜຜູ້ ອາສາລົບຕໍ່ມັນແລ້ວ
ກົວຈັກມູດມອດຂວ້ຳ ເມືອງບ້ານແຫ່ງເຮົາ ພະເຣີຍ
ເມື່ອນັ້ນພະບາດທ້າວ ເສົ້າໂສກໂສກ່າ
ຊົນລະທາໄຫລ ເນດນອງຮ່ຳຫນ້າ
ບັດນີ້ຈັກສູນເສົ້າ ເມືອງເຮົາມູດມອດ
ຄັນວ່າເຈັດວັນມາຮອດແລ້ວ ເຮົາຈັກມ້ອຍຕຸ່ມຕາຍ ແລນາ
ຍັງດູຕົນແຕ່ສາຍນາມເນື້ອ ປັດທຸມມາລູກມີງ ກູນັ້ນ
ຈິງໄດ້ສິບສີ່ເຂົ້າ ງາມລົ້ນລື່ນຂຽນ
ກົວຈັກດັບເສັ້ງສັຽງ ແນວນາມເຊື້ອຊາດ
ເຮົາຈັກເອົານາດນ້ອຍ ໄປໄວ້ທີໃດ ນໍເດ
ແຕ່ນັ້ນເສນາໄຫວ້ ຍໍມືນິບນອບ
ກໍຫາກສຸດຄຶດແລ້ວ ປັນຍານ້ອຍບໍ່ເຖີງ ພະເຣີຍ
ລາຊາໄຫ້ ຈອມເມືອງເລີຍກ່າວ
ບອກແກ່ເສເນດທ້າວ ພໍຮູ້ຮ່າງຄວາມ
ອັນວ່າໂສມງາມແກ້ວ ປັດທຸມມາລູກມີງ ເຮົານີ້
ກູຈັກຊຸກເຊື່ອງໄວ້ ຈິງແທ້ຈິງຄວນ
ເຮົາຈັກເອົານາງເຂົ້າ ໃນກອງຫນ່ວຍໃຫຍ່
ເຮົາຈິງອັດແຈບໄວ້ ນາງແກ້ວຢູ່ໃນ
ຫລອນວ່າຍັງມີສົມພານກວ້າງ ເດີນເມືອງມາຮອດ

ເອົາຍອດແກ້ວ ນາງນ້ອຍດ່ວນຫນີ
ຍັງບໍ່ເສັຽແນວເຊື້ອ ຈັກອິນເມືອງໃຫຍ່
ພໍ່ໃຫ້ໄດ້ສືບໄວ້ ພາຍຫນ້າຮຸ່ງເຮືອງ ແທ້ແລ້ວ
ແຕ່ນັ້ນເສນາພ້ອມ ຍໍມືນົບນອບ
ຂອບທີພະບາດຕ້ານ ຄວາມນີ້ຊອບຄອນ ແທ້ແລ້ວ
ຄວນທີເອົານາງເຂົ້າ ນັນທະເພລີຫນ່ອຍໃຫຍ່
ຝືນຝາກໄວ້ ເທວາເຈົ້າຢູ່ແຄນ ພະເຣີຍ
ເມື່ອນັ້ນພະບາດທ້າວ ຕືອອາດລາຊາ
ເລີຍວາຈາ ບອກຝູງສາວໃຊ້
ສູຈົງໄປເຊີນແກ້ວ ປົດທຸມມາລູກມິ່ງ ກູນັ້ນ
ກັບທັງກັມລະເຍດເນື້ອ ນາງແກ້ວແມ່ເມືອງ ທ່ຽວເຫັນ
ແຕ່ນັ້ນຝູງສາວໃຊ້ ໂດຍເປືອງຮີບແລ່ນ
ໂດຍອາດເຈົ້າ ບຸນກວ້າງທີເຊົງ
ເອົາຈົ່ງໄປໄຫວ້ແກ້ວ ນາງນາດເທວີ
ທັງບູດຕີ ຍອດນາງແພງລ້ານ
ບັດນີ້ເຫນືອຫົວເຈົ້າ ຈອມທຳພະບາດ
ວ່າໃຫ້ເຊີນມາດເນື້ອ ຈອມໄທ້ແມ່ເມືອງ
ກັບທັງກັມລະຍາແກ້ວ ປົດທຸມມານາງນາດ
ເມື່ອເຝົ້າພະບາດເຈົ້າ ບຸນກວ້າງປ່ານານ ວ່າອັນ
ແຕ່ນັ້ນເທວີແກ້ວ ໂສມງາມໂດຍອາດ
ກັບທັງນາງນາດນ້ອຍ ໂດຍເຈົ້າຮີບມາ
ກໍຈິງລີລາອົ້ນ ໂຮງຄຳຫລັງໃຫຍ່
ນົບນອບໄຫວ້ ຈອມເຈົ້າພະຍອດເມືອງ
ອັນວ່າເຫນືອຫົວເຈົ້າ ຈອມທຳພະບາດ
ມີເຫດດ້ວຍ ໃດແທ້ຈິງທັນ ພະເຣີຍ
ແຕ່ນັ້ນມ່າຍໆຫນ້າ ພະບາດອົງກະສັດ
ວາຈາໄຂ ຕໍ່ເທວີແກ້ວ
ບັດນີ້ອິນຕາຍອ້ອມ ເຖິງເມືອງເຄາະໃຫຍ່ ຈິງແລ້ວ
ວ່າຈັກມູດມອດມ້ຽນ ຕາຍແທ້ບໍ່ສົງ
ອັນວ່າເສໂນຣຸງ ພີເຍັນຕົວໃຫຍ່
ມັນກໍກິນໄພ່ຟ້າ ຫມົດແລ້ວຖ່ອງເມືອງ
ຈັກຈິເຄືອງເຖິງເທົ້າ ຈັກອິນເມືອງໃຫຍ່ ເຮົາແລ້ວ
ຈັກຈິກິນຫມູ່ອາມາດແກ້ວ ທັງອ້າໄພ່ພົນ
ກັບທັງຕົນກູທ້າວ ເທວີນາງນາດ
ຈັກຈິລົດຊີວມ້ຽນ ຕາຍສ້ຽງບໍ່ຫລໍ
ບັດນີ້ເຮົາຈັກເອົານາງແກ້ວ ບຸດຕີນ້ອຍອ່ອນ ຣານີ
ຝືນຝາກໄວ້ ເທວະເຈົ້າຈີງຄອນ ແທ້ແລ້ວ
ແຕ່ນັ້ນເທວີແກ້ວ ໄດ້ຍິນຄຳພະກ່າວ

ຍ່າວຽນກ້ຳ ຕາຍ້ອຍຖຸ່ມເທ
ໂອນໍເວລາກ້ຳ ນຳມາໃຊ້ຊາດ
ຈັກຈິເອົານາດນ້ອຍ ໄປໄວ້ທີໃດ ພະເຣີຍ
ແຫນງວ່າຕາຍໄປພ້ອມ ນຳກັນເສັຽສວ່າງ
ພໍໃຫ້ລົດຊີວມ້ຽນ ເມື່ອຟ້າຮ່ວມກັນ ພະເຣີຍ
ເມື່ອນັ້ນພະບາດທ້າວ ຂານຕອບເທວີ
ແພງສີເຣີຍ ປ່າຈາຄວາມນັ້ນ
ມັນຈັກເສັຽແນວເຊື້ອ ເມືອງເຮົາສູນເປົ່າ
ຫລອນວ່າບຸນຊ່ອຍເຈົ້າ ນາງນ້ອຍບໍ່ຕາຍ ບໍ່ຮູ້
ພີຈັກເອົານາງເຂົ້າ ໃນກອງຫນ່ອຍໃຫຍ່
ຝືນຝາກໄວ້ ເທວາເຈົ້າຢູ່ພາຍ
ຫລອນວ່າຍັງມີແນວນາມເຊື້ອ ເມືອງໄກດິນເທດ
ມາພົບອິເສດແກ້ວ ເອົາຄົ້ນດ່ວນຫນີ ບໍ່ຮູ້
ແຕ່ນັ້ນປົດທຸມມານ້ອຍ ໄດ້ຍິນຄຳພໍ່ກ່າວ
ເລີຍທ່າວລົ້ມ ມີໄລ້ລູບທວງ
ໂອນໍປີຕາໄທ້ ມາດາພໍ່ແມ່ ອ້ອຍເຣີຍ
ຈັກຈິລະອ້າເປັນກຳພ້າ ຍິງນ້ອຍຢູ່ດຽວ ນີ້ຈາ
ອ້າອໍຕາຍໄປພ້ອມ ປິດຕາພໍ່ແມ່
ອ້ຳບໍ່ທົນທຸກອ້ອນ ຕົນນ້ອຍຢູ່ດຽວ ໄດ້ແລ້ວ
ຄັນວ່າລູກບໍ່ເຫັນຈອມໄທ້ ປິດຕາພໍ່ແມ່
ລູກຈັກຫິວທອດກັ້ນ ນຳເຈົ້າສ່ອນຕາຍ ພະເຣີຍ
ອັນຫນຶ່ງລູກບໍ່ເຫັນຫນ້າເສນາທ້າວໂຍທາທຸກຫມູ່
ອ້າບໍ່ທົນທຸກໄດ້ ນອນລີ້ຢູ່ດຽວ ພະເຣີຍ
ອ້າອໍຕາຍນຳເຈົ້າ ປິດຕາພໍ່ແມ່
ແຫນງວ່າລົດຊີວຊ້ຳ ເມື່ອຟ້າຊວ່າງເວນ ພະເຣີຍ
ແຕ່ນັ້ນນາງກໍກອດຕີນແມ່ແກ່ນໄຫ້ຊົມລະເນດນອງໄຫລ
ໂສມໄວນາງ ຫອດແຮງຫິວແຫ້ງ
ແຕ່ນັ້ນເທວີແກ້ວ ມາດາຕົນແມ່
ເລີຍກອດອູ້ມ ເອົານ້ອຍລູກຕົນ
ກໍຫາກຈິດວຽນກ້ຳ ຕາເນດນອງໄຫລ
ຍົມມະນາແຖວ ຖູ່ມລົງຣຳຫນ້າ
ໂອນໍບຸດຕີແກ້ວ ໂສມງາມລູກຮັກ ແມ່ເຣີຍ
ສັງວ່າເວນຊັກນ້າວ ຈິຕາຍມອດທັງເມືອງ ນີ້ຈາ
ບັດນີ້ແມ່ຈັກມໍລະນາມ້ຽນ ຕາຍໄປເສັຽກ່ອນ
ປະອ່ອນນ້ອຍ ນາງແກ້ວຢູ່ດຽວ ແມ່ແລ້ວ
ແມ່ຈັກພັດພາກເຈົ້າ ຕາຍກ່ອນເປັນຜີ ແລນໍ
ສົມສີໃສ ລູກຕົນຍັງນ້ອຍ
ອົດເມື່ອຍອ່ອນຊ້ອຍ ເນົາຄ້າງຢູ່ດຽວ ແລນໍ

ກໍຫາກເປັນແຕ່ກໍາຂອງເຈົ້າ ຈອມຂວັນລູກນີ້ງ ຈີ່ງແລ້ວ
ກໍຈີ່ງມາເກີດໃຊ້ ປາງຮ້າຍເພື່ອເວນ ລູກເຮີຍ
ແຕ່ນັ້ນປັດທຸມມານ້ອຍ ນາງງາມໄຫ້ຕໍ່
ຍໍມືນົບຫນໍ່ໄຫ້ ອີງລ້ຳພໍ່ຕົນ
ອ້າຂໍມໍລະນາມັຽນ ຕາຍໄປພ້ອມພໍ່
ຂໍຢາໃຫ້ທຸກຍາກລ້ຳ ພອຍແລ້ງຢູ່ນານ ພໍ່ເຮີຍ
ອັນວ່າລູກກໍ່ພ້າ ຈີອົດຢູ່ຄົນດຽວ ໄດ້ລື
ຈັກຈິນອນໃນກອງ ທອດແຮງຫິວລ້າ
ລູກຂໍມໍລະນາມັຽນ ນໍາພະອົງໃຫ້ຊວ່າງ ເສັຽທ້ອນ
ຢາໃຫ້ທົ່ງທຸກອ້ອນ ຂອນຮ້າຍຜູ້ດຽວ ພະເຮີຍ
ແຕ່ນັ້ນພະບາດທ້າວ ໂລມອ່ອນບຸດຕີ
ສີມສີເຮີຍ ຍອດນາງນົງນ້ອຍ
ເຈົ້າຈົ່ງອົດສາເຍື້ອນ ຟັງຄວາມກູພໍ່
ຢາໃຫ້ເສັຽຫນໍ່ເຊື້ອ ເມືອງບ້ານແຫ່ງຮາ ພໍ່ທ້ອນ
ແຕ່ນັ້ນປັດທຸມມານ້ອຍ ຍໍມືນົບພໍ່
ເລີຍເລົ່າປາກບໍ່ໄດ້ ນ້ຳຕາຍ້ອຍຍ່າວລົງ ແລມາ
ເມື່ອນັ້ນພະບາດທ້າວ ເຕີນຫມູ່ເສນາ
ໃຫ້ໄປຫາມກອງຫລວງ ຮີບມາດຽວນີ້
ແລ້ວຈີ່ງປາກກ່າວຕ້ານ ວິເສດຄົນໃນ
ໃຫ້ຮີບເອົາຂອງກິນ ທຸກອັນຫວານສົ້ມ
ກັບທັງເຂົ້າຕົ້ມພ້ອມ ທຸກສີ່ງຂອງຫວານ
ອັນຄວນກິນເຫີງນານ ແຕ່ງປຸນແປງພ້ອມ
ໂພຊະນັງພ້ອມ ອາຫານຫລາຍສິ່ງ
ທຸກເຄື່ອງພ້ອມ ເອົາເຂົ້າໃສ່ກອງ
ຄັນວ່າບໍ່ລະບອນແລ້ວ ເສນາຊຸມໃຫຍ່
ເອົາຈີ່ງຂົ້ນໄຫວ້ເຈົ້າ ບຸນກວ້າງທີ່ເຊັ່ງ
ຝູງຂ້າໂດຍອາດເຈົ້າ ພະບາດລາຊາ
ຫາຂອງດີ ໃສ່ກອງດາແລ້ວ
ຂອງຫວານພ້ອມ ຂອງຄາວເສື່ອສາດ
ຄວນທີ່ນາງນາດແກ້ວ ເນົາແທ້ສໍາລານ ພະເຮີຍ
ເມື່ອນັ້ນລາຊາໄຫ້ ພະປິດຕາຕົນພໍ່
ກໍຈີ່ງຕ້ານຕໍ່ນ້ອຍ ແພງລ້ານລູກຕົນ
ດູລາໂສມງາມແກ້ວ ສາຍໃຈເຈົ້າພໍ່ ກູເຮີຍ
ພໍ່ຈັກເຫັນຫນ້າເຈົ້າ ແພງລ້ານເທື່ອດຽວ ນີ້ແລ້ວ
ເຈົ້າຈົ່ງອົດຍາກເຍື້ອນ ລື້ຢູ່ຄົນດຽວ ພໍ່ທ້ອນ
ສາຍໃຈກູ ຢູ່ດີເຍີເຈົ້າ
ລູກຈົ່ງເນົາໃນຫ້ອງ ກອງຫລວງຫນ່ວຍໃຫຍ່
ພໍ່ຈັກສັ່ງເຈົ້າໄວ້ ແພງລ້ານຈີ່ຈໍາ ພໍ່ເນີ

ຫລອນວ່າບຸນຊູປ້ອງ ສົມພານຊຸກຈ່ອງ
ຍັງມີຜູ້ລິດທີ່ກ້າ ເດີນດັ້ນດ່ອນມາ ບໍ່ຮູ້
ລູກຈົ່ງບົວລະບັດເຈົ້າ ເວນຕົວຖວາຍມອບ
ຂໍໃຫ້ເພື່ອນຮີບພາດຸ່ງດັ້ນ ຫນີເວັ້ນຈາກເວນ ພໍ່ເນີ
ຄ້ອມວ່າພໍ່ສັ່ງແລ້ວ ຊົມລະເນດນອງໄຫລ
ນາງກໍຍໍມືນົບ ພໍ່ຕົນທັງໄຫ້
ແຕ່ນັ້ນມາດາແກ້ວ ເທວີຕົນແມ່
ນາງກໍໂອມກອດອູ້ມ ເອົານ້ອຍລູກຕົນ
ແມ່ກໍຊົມລະທາໄຫ້ ຕີທ້ອງກິ້ງເກືອນ
ກອດລູກແກ້ວ ທັງໄຫ້ຈູບຂວັນ
ໂອນໍສາຍນາມເນື້ອ ປັດທຸມມາເຈົ້າແມ່ ກູເຮີຍ
ມັນຫາກເປັນແຕ່ກໍາກ່ອນກີ້ ຈໍາໃຫ້ຫ່າງກັນ ແມ່ແລ້ວ
ບັດນີ້ເວນນໍາຕ້ອງ ໄກກັນເຈັຽລະຈາກ
ແມ່ຈັກພາກຈາກເຈົ້າ ຕາຍມັຽນມອດຊີວັງ ແມ່ແລ້ວ
ຍັງຈັກເຫັນຕົນແກ້ວ ຍາມດຽວອັນຢູ່ ນີ້ແລ້ວ
ລູກຫນໍ່ແກ້ວ ຈອມຊ້ອຍສໍາລານ ແມ່ທ້ອນ
ແຕ່ນັ້ນນາງກໍປາກບໍ່ໄດ້ ກິ້ງເກືອນຊົມລະທາ
ຝູງເສນາທັງຊາວເມືອງ ອິດູຕົນນ້ອຍ
ເອົາກໍຍົມມະນາໄຫ້ ໃນໂຮງຄັບຄັ່ງ
ອົກຄັ່ງແຄ້ນ ນໍາແກ້ວຍອດນາງ
ອັນຫນື່ງທັງເລົ່າຄຶດຮໍາຮູ້ ເຖິງແຫ່ງຄໍາຕາຍ
ອັນວ່າຄົນທັງຫລາຍ ຢູ່ເຫວົ້າສູນເສົ້າ
ແຕ່ນັ້ນກົມລະຍານ້ອຍ ປັດທຸມມານາງນາດ
ນ້ຳຕາໄຫລຢາດຍ້ອຍ ວອນໄຫວ້ພໍ່ຕົນ
ກັບທັງມາດາໄຫ້ ເທວີຕົນແມ່
ໄຫວ້ທັງເຖົ້າແກ່ພ້ອມ ລົວປ້າຍ່ານາຍ
ນາງຖວາຍໄຫວ້ ບັງຄົມລາຍາດ
ແລ້ວຈີ່ງຍົວລະຍາດເຂົ້າ ກອງແກ້ວບໍ່ນານ
ແຕ່ນັ້ນເສນາພ້ອມ ມຸນຕີອົດແຈບ
ແລ້ວຈີ່ງຫາມຍອດແກ້ວ ນາງຂົ້ນໃສ່ທໍ່
ເມື່ອແຂວນໄວ້ ທໍ່ພະນາງຫລັງໃຫຍ່
ແລ້ວຈີ່ງຍໍຍົກອັນດອກໄມ້ ທັງໄຕ້ທູບທຽນ
ອັນວ່າປິດຕາໄຫ້ ລາຊາຕົນພໍ່
ກໍຈີ່ງນົບນອບໄຫວ້ ເທວາເຈົ້າທຸກແດນ
ຂໍໃຫ້ແນນນໍາເຝົ້າ ຈອມແພງນາງນາດ
ຢາໃຫ້ເສັຽຊາດເຊື້ອ ເມືອງບ້ານມອດຈົມ ແດ່ທ້ອນ
ກັບທັງອິນພົມພ້ອມ ເທພາທຸກແຫ່ງ
ມາຊ່ອຍຄ້ຳ ຊູນ້ອຍຍອດນາງ ແດ່ທ້ອນ

ຄືອນວ່າບໍ່ລະບອນແລ້ວ ເສນາລາເລີກ
ໃພກໍເມືອສູ່ຫ້ອງ ເຮືອນຢ້າວແຫ່ງມັນ ແທ້ແລ້ວ
ອັນວ່າຈັກອິນຂ້ອງ ເມືອງຫລວງອັບປະໂສກ
ຫມອງຫມື່ນເສົ້າ ເປັນຈວງຽນວຍ
ຄອຍຄອງຖ້າ ຄ່ຳຕາຍທຸກຫມູ່
ເຂົ້າບໍ່ນ້ຳ ວາງໄວ້ຢູ່ເຕີງາ
ເອົາກັນໄຫ້ ໃນເຮືອນທົ່ວຫອດ
ຄິດຮອດຮັ້ນ ໃຈຕັ້ງແຕ່ຈິຕາຍ ແທ້ແລ້ວ
ບັດນີ້ຊາດີກາບັ້ນ ຈັກອິນໄວ້ກ່ອນ
ຈັກຈິກ່າວຮອດຮຸ້ງ ຕົວກ້າຍັກເຍັນ ກ່ອນແລ້ວ
ມັນກໍເນົາຢູ່ຫ້ອງ ເຂົາວົງດອຍໃຫຍ່
ເຫັນຫມູ່ຄົນມາກົ້ລົ້ນ ຈິງແທ້ຊື່ນຊົມ
ມັນຈິງຄຶງປີກໄວ້ ບິດມືດມົວສູນ
ຮຸ້ງກໍລົງເຖິງຫ້ອງ ກິນຄົນເປັນເຫຍື່ອ
ມູດມອດມ້ຽນ ຫມົດສ້ຽງຊູ່ພາຍ
ແຕ່ນັ້ນເສໂນຮຸ້ງ ພົວເມັຽຕົວໃຫຍ່
ມັນຈິງຄາຍຄູກໄວ້ ສູງຂັ້ນທໍ່ພູ
ອັນແຕ່ໃນຫົນຫ້ອງ ຄາເມທຸກແຫ່ງ
ມັນບໍ່ໄວ້ ກິນສ້ຽງບໍ່ຫລໍ
ຍັງແຕ່ໃນວຽງແກ້ວ ຈອມທຳພະບາດ
ຫລາຍພໍ່ນີ້ ມັນຊ້ຳທ່ຽວກິນ
ມັນຈິ່ງລົງສູ່ຄຸ້ມ ພະບາດລາຊາ
ມັນກໍກິນເສນາ ຫມູ່ຊຸນຫມົດສ້ຽງ
ກັບທັງນັກສະຫນົມພ້ອມ ຊາວໂຮງໃຊ້ຊ່ວງ
ມັນບໍ່ໄວ້ ກິນສ້ຽງບໍ່ຫລໍ
ຍັງແຕ່ລາຊາເຈົ້າ ກັບເທວີພະແມ່ ເມືອງນັ້ນ
ສອງກໍເນົານັ່ງຖ້າ ໂຮງກວ້າງຢູ່ຄອງ
ພະຈິງແລເຫັນຮຸ້ງ ພົວເມັຽຕົວໃຫຍ່
ພະບາດຫ້າວ ໃຈກ້າບໍ່ກົວ
ມິງຈຶ່ງມາກິນທ້ອນ ພິເຍັນຮຸ້ງໃຫຍ່
ກູຈັກທານທອດເນື້ອ ວາງໃຫ້ແກ່ມິງ ແທ້ແລ້ວ
ອັນວ່າເສນາຂ້າ ໂຍທາພວກໄພ່ ກູນັ້ນ
ມິງບໍ່ໄວ້ ກິນສ້ຽງບໍ່ຫລໍ
ຍັງແຕ່ອົງກູນີ້ ກັບເທວີນາງນາດ
ຄາດມາເປັນເຫຍື່ອທ້ອງ ມິງແທ້ຮີບກິນ ທ່ຽວເຫັນ
ແຕ່ນັ້ນຮຸ້ງກໍພັນຕີນເຂົາ ເຖິງພະຍາເຮືອຮີບ
ມັນກໍກິນທ່ອນຫ້າວ ສອງເຈົ້າພໍ່ກັນ
ມັນຈິງສືບກິນເນື້ອ ສອງພະອົງປັດຂອດ

ແລ້ວຈິງເກັບຄູກເຈົ້າ ເອົາໄວ້ທີ່ຄວນ
ມັນກໍກິນຫມົດສ້ຽງ ໃນວັງປັດຂອດ
ແລ້ວຈິງຄາຍຄູກໄວ້ ສູງຂັ້ນຊົ່ວຕາ ຫັ້ນແລ້ວ
ອັນແຕ່ໃນຫົນຫ້ອງ ຈັກອິນເມືອງໃຫຍ່
ຝູງຊ້າງມ້າ ກິນສ້ຽງຊູ່ພາຍ
ກັບທັງງົວຄວາຍພ້ອມ ຫມູຫມາເປັດໄກ່
ມັນບໍ່ໄວ້ ກິນສ້ຽງບໍ່ຫລໍ ເຈົ້າເຮີຍ
ກໍເລົາດູຫມົດສ້ຽງ ໃນເມືອງປັດຂອດ
ມັນຈິງບິນລ່ອງຜ້າຍ ຜາຍລ້ຳຕ່າວຄືນ
ຂັ້ນສູ່ຟ້າ ບິນລ່ອງເວຫາ ແລເຢີ
ເຖິງຄີລີ ທີ່ດອຍເຊົາຍັ້ງ
ແຕ່ນັ້ນເສໂນຮຸ້ງ ພົວເມັຽຕົວໃຫຍ່
ຂາກໍກິນອີ່ມທ້ອງ ບໍ່ມີຮ້ອນຮ່ຳເຄືອງ
ມັນກໍເນົາໃນຫ້ອງ ດອຍຫລວງວົງຍະມາດ
ເພື່ອຮັກສາຫນ່ອຍແກ້ວ ອົງລ້ຳຫນໍ່ພຸດໂທ ເຈົ້າເຮີຍ
ບັດນີ້ໂຍຕິກາບັ້ນ ເສໂນເຊົາກ່ອນ
ຈັກກ່າວຮອດນາງນາດນ້ອຍ. ແພງລ້ານຢູ່ກອງ ກ່ອນແລ້ວ
ບັດນີ້ຈັກກ່າວເຖິງປັດທຸມມາ**ພອນ** ໃນກອງໄຫ້ຢູ່
ນາງກໍຄິດຄ້ອຍໆ ເຖິງເຈົ້າພໍ່ແມ່ຕົນ
ກັບທັງລົວອາປ້າ ຕານາຍເຖົ້າແກ່
ກັບທັງຍາດພີ່ນ້ອງ ລຸງເຊືອຊູ່ຄົນ
ໂອນໍ່ກູກໍຄືນດຽວໄຫ້ ໃນກອງຫລາຍຄ່ຳຄືນແລ້ວ
ປານນີ້ພໍ່ແມ່ລົດຊີວັມ້ຽນ ຕາຍແທ້ຈາກກູ ແລນໍ
ກັບທັງໂຍທາພ້ອມ ຊາວເມືອງຕາຍຈາກ ກູແລ້ວ
ກໍຫາກຄູກຳປັ້ງ ເມືອງບ້ານງຽບເຢັນ ນີ້ເດ
ໂອນໍ່ກຳກູແລ້ວ ເວນໃດຈູງຈ່ອງ
ຄືຈິຕາຍໃຄ່ລ້າ ເນົາແລ້ງຢູ່ກອງ ແລນາ
ນາງຈຶ່ມໄຫ້ ຄຶດຮ່ຳໄປມາ
ຊົນລະທາໄຫລ ເນດນອງຟູມຫນ້າ
ໂອນໍ່ກູຈັກຕີທວງມ້າງ ຕາຍເສັຽໃຫ້ຊວ່າງ ເທາະລີ
ຈິດນີ້ງຍັງເລົາຄຶດຮອດຄ່ຳພໍ່ແມ່ຕ້ານໂລມເລົ້າສົງກູ ນັ້ນມາ
ແຕ່ນັ້ນນາງຈິງວອນວານໄຫວ້ ທາຄຸນພໍ່ແມ່
ກັບທັງເທບພະດາດ່ານດ້າວ ຮັກສາຂ້າຊູ້ວັນ
ກັບທັງອິນພົມພ້ອມ ສໍລະຍານຕັດສ່ອງ
ຂໍໃຫ້ຊູ່ຊ່ອຍຂ້າ ປາງນີ້ຢ່ານານ ແດ່ທ້ອນ
ຂ້າກໍທຸກຍິ່ງລ້ຳ ແສນໂສກໂສກາ
ຂໍໃຫ້ເທພາຜາຍ ໂຜດຕົນຕົວຂ້າ
ນາງກໍອະທິຖານໄຫວ້ ຍໍ່ມືນົບນອບ

ນາງນາຄນ້ອຍ ນອງຫນ້າບໍ່ວາຍ ແທ້ແລ້ວ
ບັດນີ້ກໍຈຶ່ງຮ້ອນເທບພະໄທ້ ທຸກຫມູ່ເທພາ
ເພື່ອອິດູຕົນນາງ ຫອດແຮງທົວໄທ້
ແຕ່ນັ້ນເທບພະໄທ້ ຕັດສ່ອງສໍລະຍານ
ກໍຈຶ່ງເຫັນລາຊາທ້າວ ຈອມທຳບຸນມາກ
ທົງຢູ່ສ້າງ ເມືອງກວ້າງໂຍດຍາວ
ເຈົ້າຈຶ່ງໄປບົນດົນເອົາ ທົ່ວໃຈຈອມລາດ
ຈຶ່ງໃຫ້ອົງທ່ອນທ້າວ ຄຶງຮ້ອນດັ່ງໄຟ ແທ້ແລ້ວ
ບັດນີ້ຈັກກ່າວເຖິງຈຸນລະນີທ້າວ ເນົາປາງພາສາດ ກ່ອນແລ້ວ
ພະກໍເນົາຢູ່ຫ້ອງ ໂຮງກວ້າງບໍ່ສະບາຍ
ເພື່ອວ່າເທວະດາທ້າວ ສັງຫອນອົງຮ້ອນເຮົງ
ກໍຈຶ່ງຍັງເກີດຮ້ອນ ເຖິງເຈົ້າພະຍອດເມືອງ
ຄືດັ່ງໄຟລາມເນື້ອ ເປັນແປວລົມລວາບ
ອົນວ່າພະບາດທ້າວ ຄະນຶງແຈ້ງຮ່ຳເພິງ
ພູກໍທົ່ງເມືອງກວ້າງ ເນົານານຫລາຍຂວບ ມາແລ້ວ
ບໍ່ທ່ອນມີເຫດຮ້ອນ ບຽນເນື້ອແຕ່ງກູ ແທ້ນາ
ແຕ່ນັ້ນພະຈຶ່ງປາກກ່າວຕ້ານ ຈາຕໍ່ເທວີ
ກັນລະຍາເຮີຍ ດັ່ງລິດເດຈ້າ
ພີກໍຄາຍຄຶງຮ້ອນ ໃນຕົນກູລາດ
ຫາກຢູ່ຫາກມາເຫື່ອຍາດຍ້ອຍ ຮ່ຳຫນ້າຖຸ້ມແຖວ ພີນາ
ແຕ່ນັ້ນເທວີແກ້ວ ອັກຄີນາງນາດ
ນາງກໍຮີບຟັງຟ້າວ ຈົດອ້າຊ່ວງໃນ
ໃຫ້ເອົາເອົາວິແກ້ວ ຈຳພະນອນພັດແກວ່ງ
ກັບທັງສິງໂສດນ້ຳ ບຸນກວ້າງບໍ່ນານ
ກັບທັງສາວສະຫນົມພ້ອມ ວີຄຳພັດແກ່ວງ
ກໍບໍ່ຫາຍໂສກຮ້ອນ ຈອມເຈົ້າເຍືອງໃດ ແທ້ແລ້ວ
ແຕ່ນັ້ນພະບາດທ້າວ ຕົນອາດລາຊາ
ໃຫ້ໄປຫັນຫມໍທວາຍ ຮີບມາມິ້ຊາ
ເມື່ອນັ້ນຫມໍກໍໂດຍຄຳເຈົ້າ ລາຊາມີອາດ
ກໍຈຶ່ງຂຶ້ນເຝົ້າເຈົ້າ ບຸນກວ້າງທີເຊັງ
ສົນໃດແທ້ ຈອມເກົ້າພະບາດ
ມີເຫດດ້ວຍ ທັນອ້າເຍືອງໃດ ພະເຮີຍ
ເມື່ອນັ້ນພະບາດທ້າວ ເຕັມອາດອົງກະສັດ
ວາຈາຫມໍ ຊູ້ອັນພາຍພ້ຽນ
ອັນວ່າຄຶງເຮົາຮ້ອນ ຄືໄຟລົມລວາບ
ຈັກຊິເປັນເຫດຮ້ອນ ການທ້າວເຍືອງໃດ
ຫມໍຈຶ່ງທວາຍດູທ້ອນ ຕາມຄູສອນສັ່ງ
ຈັກວ່າເກີແລະຮ້າຍ ຫມໍເຖົ້າສ່ຽງດູ ຫັ້ນເຫັນ

ແຕ່ນັ້ນຫມໍກໍຍໍມືໄຫວ້ ຈອມເມືອງກົ້ມຂາບ
ນົບນອບນວ ຖວາຍເຈົ້າທີເຊັງ
ແຕ່ນັ້ນຫມໍກໍຍໍສໍຕ້ອງ ກະດານຫັນຂຽນອິດ
ລົງເລກຕັ້ງ ກົງແກ້ວຫລໍ່ດູ
ຜົຈັກດູຕາມແທ້ ອາຈານສອນສັ່ງ
ກໍບໍ່ມີເຫດຮ້າຍ ເຖິງເຈົ້າພະຍອດເມືອງ ພະເຮີຍ
ທໍ່ວ່າພະບາດທ້າວ ມີໂລກໂລຄາ
ຄົນບໍ່ເດີນພົງໄພ ກໍບໍ່ມີຄຳຮ້ອນ
ຄວນທີ່ຕົນຈອມເຈົ້າ ໄລເມືອງເສ້ຽກ່ອນ
ຈຶ່ງຈິຫາຍໂສກຮ້ອນ ເມື່ອຫນ້າຢູ່ເຢັນ ພະເຮີຍ
ທໍ່ວ່າຍັງຈັກເປັນເອັນຕ້ອງ ທົວທີ່ນ່ອຍນຶ່ງ
ແດນແຕ່ນັ້ນ ເມື່ອຫນ້າໂຊກມີ
ຫາກຈັກໄດ້ລາບແທ້ ແວນປະເສີດພົງໃຈ ພະເຮີຍ
ເຫັນຈັກເປັນແນວນານ ຫນໍ່ເມືອງໄກລ້ຳ
ແຕ່ນັ້ນຫມໍກໍຖວາຍກອນແລ້ວ ຍັງຄົມລາເລີກ
ກໍຈຶ່ງເມື່ອສູ່ຫ້ອງ ເຮືອນຢ້າວແຫ່ງຕົນ ແທ້ແລ້ວ
ເມື່ອນັ້ນພະກໍຟັງຄວາມເຖົ້າ ຫມໍທວາຍຕ້ານກ່າວ
ພະຈຶ່ງບອກສ່ຳອ້າ ພໍຮູ້ຮ່າງຄວາມ
ບັດນີ້ເຮົາຈັກໄປເຊີດເນື້ອ ໃນເຖື່ອນໄພຂວາງ
ພໍໃຫ້ຫາຍໂສກາ ສວ່າງໂພຍຄຳຮ້ອນ
ສູຈຶ່ງປຸນດາຫ້າງ ແວນເປືອງຕົກແຕ່ງ
ຄາດເຄືອງຊ້າງ ທັງມ້າໃສ່ອານ
ກັບທັງອາຫານເຂົ້າ ປູປາທຸກສິ່ງ
ຫມັ້ຽງຫມາກພ້ອມ ທັງເຫລົ້າແລະຢາ
ໃຫ້ຮີບປຸນເປືອງຫ້າງ ດາດີທຸກສິ່ງ
ຈຶ່ງໃຫ້ຕົກແຕ່ງພ້ອມ ຍາຊ້າຮີບພະລັນ ທ່ຽວທ້ອນ
ຄ້ອມວ່າພະກ່າວແລ້ວ ຂຸນຮີບໂດຍພະລັນ
ລາຈອມເມືອງ ລວດລົງມີ້ຊ້າ
ມາເຖິງຫ້ອງ ຫໍສະຫນາມເລີຍກ່າວ
ບອກຂ່າວໃຫ້ ເອົາຮູ້ຊູ່ພາຍ
ບັດນີ້ເຫນືອຫົວເຈົ້າ ຈອມເມືອງມີອາດ
ພະຈັກໄປປະພາດຫລິ້ນ ເດີນດົ້ນຄວ່າໄພ ວ່າອັນ
ຈຶ່ງໃຫ້ພາກັນຫ້າງ ປຸນເປືອງແວນຮີບ
ຢ່າໃຫ້ຊ້າ ດຽວນີ້ຮີບພະລັນ ຫັ້ນທ້ອນ
ແຕ່ນັ້ນຊາວເມືອງພ້ອມ ໄດ້ຍິນຄຳເຕີນປາວ
ເອົາກໍໂດຍອາດເຈົ້າ ດາຫ້າງບໍ່ນານ
ກໍຈຶ່ງປຸນເອົາພ້ອມ ໂພຊະນັງຫລາຍສິ່ງ
ແລ້ວຈຶ່ງມາສູ່ຊຸ້ມ ວັງເຈົ້າຊູ່ຄົນ

| | |
|---|---|
| ຟູງໝູ່ມາຍຄວາມຊ້າງ | ປຸນເປືອງຄາດເຄືອງ |
| ຊ້າງແລະມ້າ | ດາຫ້າງໃສ່ອານ |
| ກໍຈິງບໍລະບອນແລ້ວ | ເສນາຕົກແຕ່ງ |
| ທຸກສິ່ງຖ້ວນ | ດາໄວ້ຊູ້ອັ້ນ |
| ກໍທາກຽຫລາຍລົ້ນ | ພົນຫລວງລັບລ້ຽງ |
| ກັບທັງຊ້າງແລະມ້າ | ສະຖຽນຮ້ອງນີ້ນັ່ນ |
| ຊຸມກໍເຕີມກັນຕັ້ງ | ເປັນແຖວຖັນຖີ |
| ຄອຍຢູ່ຖ້າ | ພະເມືອງເຈົ້າຊູ້ຄືນ |
| ເຖິງເມື່ອຍາມດີແລ້ວ | ພູທອນສະເດັດອອກ |
| ພະຈິງຕ້ານສັ່ງແກ້ວ | ນາງນາດມະເຫສີ |
| ເທວີເຮີຍ | ຄ່ອຍເນົາຄອຍຖ້າ |
| ບັດນີ້ພີ່ຈັກໄປດ່າດ້າວ | ເດີນເຖື່ອນໄພຂວາງ ກ່ອນແລ້ວ |
| ນາງຈິ່ງເນົາປາງທອງ | ສຳລານເຍີເຈົ້າ |
| ແຕ່ນັ້ນເທວີແກ້ວ | ໄດ້ຍິນຄວາມພະສັ່ງ |
| ຍົກມືຍົ້ມໃສ່ເກົ້າ | ຖວາຍໄຫວ້ບໍ່ນານ |
| ໄປດີເຢີ້ມຂວາງເຈົ້າ | ກະສັດຕາຕົນອາດ ຮຽມເອີຍ |
| ຈິ່ງໃຫ້ທາຍໂສກຮ້ອນ | ໃນເນື້ອອຸ່ນບານ ແດ່ທ້ອນ |
| ຄ້ອນວ່າພະສັ່ງແລ້ວ | ລົງຈາກສະຖານທອງ |
| ພູມີທັງພາຍສານ | ອອກເມືອງມີຊ້າ |
| ຍິດງຍ້າຍ | ປະດືອອກອອນທາງ ພຸ້ນເຍີ |
| ພົນຫລາມໄຫລ | ແຫ່ຕາມຕົນຊ້າງ |
| ຟັງຍິນຄືນໆກ້ອງ | ກອງເສບອອນທາງແລເຍີ |
| ພົນຫລວງໄຫລ | ຫລັ່ງໄປປານນ້ຳ |
| ຍິດງຍ້າຍ | ຂວ້ານທົ່ງນາພຽງ |
| ກໍຈິງເຖິງຄີລີ | ປ່າດອຍດົງກວ້າງ |
| ຫລິງເຫັນທັກທັນໄມ້ | ຊ້ອງຊໍ່ໄພພນາ |
| ຟູງໂຍທາ | ຊື່ນຊຸ່ນດົງກວ້າງ |
| ມີທັງລູກອາໄມ້ | ຍູງຍາງຕົ້ນໃຫຍ່ |
| ລົມໄປເປື້ອງ | ຄວຍລ້ອມງ່າຄອມ |
| ຈອມກະສັດທ້າວ | ພາພົນເດີນປ່າ |
| ອັນວ່າຊ້າງແລະມ້າ | ສະຖຽນຮ້ອງທົ່ວດົງ |
| ໃນພົງກວ້າງ | ນາງໆຫລາຍສິ່ງ |
| ພະຈິງຕັ້ງ | ເຊົາຢັ້ງຮົ່ມໄຊ |
| ຟູງຄົນພ້ອມ | ປຸນເປືອງຕົກແຕ່ງ |
| ທຳໃຫຍ່ຕັ້ງ | ອົງທ້າວຢູ່ເຊົາ |
| ເຂົ້າກໍເຂົ້າກັນຫລັ່ນ | ຊຸ່ມໄພດູມ່ວນ |
| ຫອມດອກໄມ້ | ຍາມແລ້ງເມືອແລງ |
| ເຂົ້າແປງແລ້ວ | ບໍລະບອນທຸກສິ່ງ |
| ເຂົ້າຈິ່ງເຊີນພະບາດທ້າວ | ສະເດັດອົ້ມສູ່ພະພາ |
| ເສນາພ້ອມ | ຊຸມຫລວງຖ້ານໃຫຍ່ |
| ເຂົ້າແຕ່ງໄວ້ | ຂວາຊ້າຍສູ່ພາຍ |
| ຄົນຫລາຍລົ້ນ | ເຕັມດົງດ້ຳຄືນ |
| ຊຸມໝື່ນພ້ອມ | ຫລາຍຖ້ານຖ້ຽນ |
| ເມືອງມັນພ້ອມ | ຊາວເມືອງຊົມຊື່ນ |
| ບໍ່ຮູ້ກີ່ໝື່ນລ້ານ | ເຈົ້າຍັງທົ່ວດົງ |
| ອັນວ່າຟູງໝູ່ທັງຫານພ້ອມ | ບາຍປືນໄປຮົບ |
| ເຫັນໝູ່ເນື້ອ | ຕາມສົ້ນບໍ່ວາງ |
| ລາງຄົນໄດ້ | ງົວກະທິງເນື້ອເຖື່ອນ |
| ລາງຄົນໄດ້ລະມັ່ງພ້ອມ | ກວາງແຫ້ຫາບມາ |
| ເຂົ້າກໍຍໍຖວາຍເຈົ້າ | ລາຊາພູວະນາດ |
| ເມື່ອນັ້ນພະບາດໃຫ້ | ເຕີມຕັ້ງແຕ່ງຄົວ |
| ເຂົ້າກໍໝົວງພ້ອມ | ທຳແກງກ້ອຍລາບ |
| ດູຄືນເດົ້າ | ເຂົ້າທ້າງແຕ່ງແລງ |
| ພໍຄາວແລ້ວ | ບໍລະບອນທຸກສິ່ງ |
| ເຂົ້າຈິ່ງຍົກສຳລັບເຈົ້າ | ເລີຍອົ້ນສູ່ສະພາ |
| ເສນາພ້ອມ | ມູນຕີຫລາຍໝູ່ |
| ຊົມຊື່ນເດົ້າ | ກິນເຂົ້າເມືອແລງ |
| ດູສະໝຸກແທ້ | ມີແກງກ້ອຍລາບ |
| ເຂົ້າເລົ່າແກ້ມ | ກິນຫລົ້ນມ່ວນໄພ |
| ພໍຄາວແລ້ວ | ຖອຍພາລາເລີກ |
| ແຕ່ນັ້ນອັນດ່ວນເຂົ້າ | ເຂົ້າແກ້ວດ່ຳຈອນ |
| ໂຍທາເຂົ້າ | ສູ່ວັນຄ່ຳຊົມຊື່ນ |
| ລາງພ່ອງອັບຍິນອ້ອຍ | ອອຍຊູ້ຊວ່າແຊວ |
| ພໍຍາມແລ້ວ | ລາຕີເຖິງທ່ຽງ |
| ຟູງໝູ່ພົນໄພ່ຟ້າ | ນອນພ້ອມວຽນເຢັນ |
| ອັນວ່າອົງກະສັດເຂົ້າ | ທໍບັນໄຊຍະນາດ |
| ພະບາດທ້າວ | ທາຍຮ້ອນຢູ່ເຢັນ ແທ້ແລ້ວ |
| ພໍເມືອແສງທອງອົ້ນ | ລາຕີແຈ້ງສວ່າງ ມານັ້ນ |
| ພະບາດທ້າວ | ເລີຍຄ້ຳຕື່ນຕົນ |
| ພະກໍລຸກສ່ວາຍໜ້າ | ລ້າງອາບສົງສີ |
| ຈັມມັນອົບ | ອາບອົງຫອມເຮົ້າ |
| ແລ້ວຈິ່ງລີລາອົ້ນ | ທໍພະພາສະຖິດຢູ່ |
| ເສເນດເຝົ້າ | ຂວາຊ້າຍນັ່ງເມືອງ |
| ແຕ່ນັ້ນພະຈິງປາກກ່າວຕ້ານ | ຈາໝູ່ເສນາ |
| ທັງໂຍທາ | ຊູ່ຄົນນວນພ້ອມ |
| ບັດນີ້ເຮົາຈັກໄປເຊີດເນື້ອ | ໃນເຖື່ອນພົງໄພ |

ຫາຫມູ່ກວາງ ປາດອຍດົງກວ້າງ
ສູຈົງເຕີນກັນຫ້າງ ພົງພານທຸກຫມູ່
ຖືຫອກງ້າວ ປືນພ້ອມຊູ່ຄົນ ຫັ້ນທ້ອນ
ກັບທັງອາຊະໄນມ້າ ຕົວດີຄາດເຄືອງ
ສູປ່າຊ້າ ດາຫ້າງຣີບພະລັນ ທ່ຽວເຫັ້ນ
ແຕ່ນັ້ນຂຸນກໍໂດຍຄຳເຈົ້າ ລາຊານິອາດ
ອາມາດທ້າວ ເຕີນຂ້າປາວພົນ
ແຕ່ນັ້ນທັງຫລາຍພ້ອມ ໂຍທາທຸກຫມູ່
ເຂົ້າບໍ່ຊ້າ ດາໄວ້ຊູ່ຄົນ ແທ້ແລ້ວ
ບັດນີ້ຈັກກ່າວເຖິງເທວະດາເຈົ້າຮັກສາອົງຕົນປະເສີດ ກ່ອນແລ້ວ
ພະກໍມາສຳແດງຕົນໃຫ້ ເປັນກວາງທອງຕ່ອນນຶ່ງ
ທຳເພດໃຫ້ ເປັນແທ້ດັ່ງກວາງ
ອັນວ່າຜິວພາງເຫລື້ອມ ເຫມືອນຄຳລຽງຫລໍ່
ໃສສ່ອງກັຽງ ພີ້ອນຮູບງາມ
ເຂົາແດງເອັ້ມ ສະເຫມີຄຳທັງຄູ່
ກວາງຈຶ່ງຍົກຍ່າງຍ້າຍ ປີນເຂົ້າຜ່າພົນ
ສິນລະວົນເຕັ້ນ ໄປເປືອງເຣວຣີບ
ຝູງຫມູ່ພົນໄພ່ທ້ວງ ທັງຄ້າຍມີມັ້ນ
ແຕ່ນັ້ນຈອມທັບທ້າວ ເຫັນກວາງກະສັນໂສກ
ພະກໍຄຶດຢາກໄດ້ ເທວະດາໃຫ້ບັນດົນ
ພະກໍຈັດພົນລ້ອມ ກວາງທອງຕ້ອນໄລ່
ແຕ່ນັ້ນເສເນດຟ້າວ ໂດຍເຈົ້າຣີບເປືອງ
ກໍຈຶ່ງເຕີນກັນລ້ອມ ພົນຫລວງລະວັງຮອບ
ບາງພ່ອງຂຶ້ນຂີ່ມ້າ ວຽນອ້ອມຮອບກວາງ
ກວາງກໍປີບວຽນເຕັ້ນ ໄປມາເຣຮ່ອນ
ເຂົາລັດຕ້ອນ ເຟືອນຟົ້ນນີ້ນັ້ນ
ກວາງກໍໄປຈົນໃກ້ ທີ່ໄຊພູວະນາດ
ພະກໍຈັບດາບກ້າ ຄົນໄຊແກ້ວລອດລົງ
ເຈົ້າຈຶ່ງທົງຍັງມ້າ ອາຊະໄນຕົວອາດ
ຝູງຫມູ່ຄົນມືດກຸ້ມ ທວນງ້າວແຫ່ຕາມ
ສິນງເຕັ້ນ ນຳກວາງຕ້ອນໄລ່
ເຖິງຈົນໃກ້ ກວາງເຕັ້ນແລ່ນເປືອງ
ແຕ່ນັ້ນລາຊາເຈົ້າ ຈັດພົນເລີຍໄລ່
ເຂົາຟັງຟ້າວ ຕີມ້າເລັງເລວ
ກໍຈຶ່ງລົງວຽນອ້ອມ ກວາງຄຳທຸກແຫ່ງ
ແຕ່ນັ້ນພະບາດທ້າວ ເຕີນໃຫ້ຊູ່ທາງ
ຄັນວ່າໃຜໃຫ້ກວາງກາຍໄດ້ ຈຶ່ງເອົາຕົວເປັນໂທດ ຈິງແລ້ວ
ຄັນວ່າໃຜຜູ້ກຸມຜູກໄດ້ ກວາງນັ້ນມັດເອົາ

ເງິນຄຳແກ້ວ ກູພະອົງເທຫອດ
ເສື້ອແລະຜ້າ ຈິເອົາໃຫ້ທອດທານ ແທ້ແລ້ວ
ແຕ່ນັ້ນເຂົາກໍບາຍເອົາຜ້າ ພັນກັນເປັນເຊືອກ
ຂຶງຂົ້ນໄວ້ ຄອຍຖ້າຜູກເອົາ
ຄ້ອມວ່າແລ້ວ ເຕີນກັນຕັ້ງໂຫ່
ກວາງກໍເລີຍຕື່ນຢ້ານ ຄະໂຍງເຕັ້ນຮ່ອນເຣ
ເຂົາກໍຂຶງຍັງຜ້າ ວຽນນຳຄອງຜູກ
ກວາງເລົ່າເຕັ້ນ ຄະໂຍງຂ້າມແລ່ນຫນີ
ກໍຈຶ່ງໄປກາຍໃກ້ ຈອມເມືອງພູວະນາດ
ອັນວ່າພະບາດທ້າວ ຕີມ້າແລ່ນຕາມ
ຝູງຫມູ່ເສນາຂ້າ ໂຍທາພ້ອມໄພ່
ເຂົາມືດກຸ້ມ ນຳເຈົ້າແລ່ນຕາມ
ກໍບໍ່ມີທັນເຈົ້າ ຈອມເມືອງຕົນອາດ
ເພື່ອວ່າພະບາດທ້າວ ຕີມ້າເລັງເລວ
ລາຊາເຈົ້າ ຕາມກວາງຍິຍ່ອງ
ກວາງແລ່ນເຕັ້ນ ໄປຫນ້າຊື່ວໄກ
ພໍຄາວແລ້ວ ກວາງທອງຕົວອາດ
ທຳເພດຂາລາກຄົ້ນ ຕົນທ້ານລາກໄປ ແທ້ແລ້ວ
ແຕ່ນັ້ນພູທອນທ້າວ ກຳຕາວເຣວເຣັງ
ພະກໍຕີຖີບມ້າ ພົນເຂົ້າໄລ່ຕາມ
ຫວນຈັກໄປຈົນໃກ້ ຂາດີຣີບແລ່ນ
ແຕ່ນັ້ນພະບາດທ້າວ ຕີມ້າແລ່ນນຳ
ຫວນຈັກໄກຈອມເຈົ້າ ກວາງທອງທຳເພດ
ຕິແມບລົ້ນ ຂາທ້ານລາກເພ ແທ້ແລ້ວ
ແຕ່ນັ້ນລາຊາທ້າວ ຕີລວາພົນໃສ່
ກວາງກໍພູດລຸກໄດ້ ຄະໂຍງເຕັ້ນແລ່ນເປືອງ
ກໍບໍ່ມີຂາທ້ານ ປີບເປືອງສັນເກົາ
ພະບາດເຈົ້າ ຕີມ້າຖີບພົນ
ພະກໍຕົນດຽວເຈົ້າ ຕາມນຳຍິຍ່ອງ
ກໍຈຶ່ງເຖິງແຫ່ງຫ້ອງ ດົງກວ້າງກ່ວາໄກ
ອັນວ່າເສນາຂ້າ ໂຍທາພັດພາກ
ຝູງຫມູ່ພວກໄພ່ພ້ອມ ຫລົງເຈົ້າພະຍອດເມືອງ
ກໍບໍ່ມີໃຜຜູ້ ໄປຕາມພູວະນາດ
ມີແຕ່ພະບາດທ້າວ ທົງມ້າໄລ່ກວາງ ແທ້ແລ້ວ
ແຕ່ນັ້ນເຂົາກໍໂຮ່ເຣຟ້າວ ຫາອົງພູວະນາດ
ຝູງຫມູ່ເສເນດທ້າວ ເດີນດົ້ນກູກຫາ
ເຂົາກໍບໍ່ໄດ້ຍິນສຽງເຈົ້າ ລາຊາຂານຕອບ
ເຂົາຈຶ່ງເດີນລ່ວງເຂົ້າ ດົງກວ້າງຊອກຫາ

ກໍບໍ່ມີເຫັນເຈົ້າ ຈອມເມືອງພູວະນາດ
ເຂົາກູກຮ້ອງ ດັ່ງກວ້າງມີນັ້ນ
ເຂົາກໍຮຸນແຮງຮ້ອງ ຫາອ້ງນໍາຊອກ
ກໍບໍ່ມີພົບພະບາດເຈົ້າ ບຸນກວ້າງທີ່ໃດ
ເຂົາກໍເຕີນກັນພ້ອມ ມອນມາເກົ້າໝູ່
ຂຸນຈຶ່ງມາກ່າວເວົ້າ ຈາຖ້ອຍຕໍ່ກັນ
ບັດນີ້ເຮົາກໍພັດພາກເຈົ້າ ຫລົງປ່າກາງໄພ
ອັນວ່າຈອມຫົວພັດ ຈາກເຮົາຈິ່ງແທ້
ຈັກວ່າຫລົງໄປລ້າງ ທາງໃດບໍ່ຮູ້ແຫ່ງ
ກໍຫາກເສັຽພະບາດຜູ້ ບຸນກວ້າງຄອບກວາງ ແລນໍ
ແຕ່ນັ້ນທັງຫລາຍພ້ອມ ຈາກັນທຸກໝູ່
ຝູງທ່ານທ້າວ ເລີຍເວົ້າຕໍ່ກັນ
ດຽວນີ້ຄວນທີ່ເຮົາຈັກຄືນສູ່ຫ້ອງ ທູນຄອບເທວີ ກ່ອນລີ
ຫລືວ່າເຮົາຈັກເຊົາພົນຢູດ ຢູ່ຄອງຄອຍເຈົ້າ
ແຕ່ນັ້ນເສນາເຖົ້າ ມູນຕີ່ຖ້ານແກ່
ກໍຈິ່ງຮີບພາກຖ້ອຍ ດອມທ້າວໝູ່ຂຸນ
ບັດນີ້ຄວນທີ່ເຮົາຈັກພາພົນເຂົ້າ ເມືອເມືອງມັກຄະລາດ ເຮົາພຸ້ນ
ຫລອນວ່າພະບາດເຈົ້າ ເດີນດົ້ນຮອດເມືອງ ບໍ່ຮູ້
ຄັນວ່າເຮົາບໍ່ເຫັນທ່ອນທ້າວ ພະບາດລາຊາ ດັ່ງນັ້ນ
ເຮົາຈຶ່ງພາໂຍທາ ທ່ຽວຫາຈອມເຈົ້າ
ແຕ່ນັ້ນທັງຫລາຍພ້ອມ ຄວາມດຽວວ່າຊອບ ຈິ່ງແລ້ວ
ຂຸນຈຶ່ງເຕີນໄພ່ພ້ອມ ຄືນເຂົ້າສູ່ເມືອງ
ແຕ່ນັ້ນຂຸນຈຶ່ງເມືອທູນໄຫວ້ ເທວີນາງນາດ
ເລົ່າພາກຖ້ອຍ ຖວາຍເຈົ້າຊູ່ອັ້ນ
ບັດນີ້ເສັຽທ່ອນທ້າວ ພະບາດບຸນເຮືອງ
ພະກໍພາພົນຫລວງ ໄລ່ກວາງດົ່ງກວ້າງ
ພອຍເລົ່າຫລົງໄປແທ້ ທາງໃດບໍ່ຮູ້ແຫ່ງ
ຝູງຂ້ານໍາຕໍ່ສົ້ນ ໄປແລ້ວເລົ່າຫລົງ ເຈົ້າເຮີຍ
ອັນວ່າເດີນຕາມເຄົ້າ ຫົວທີ່ຕົ້ນເຫດ
ຍັງມີກວາງແລ່ນເຕັ້ນ ປົບເຂົ້າຜ່າພົນ
ກວາງນັ້ນນົ່ວງາມພັຽງ ສະເໜີຄໍາທັງແຫ່ງ
ກໍຫາກດູຕ່າງແທ້ ກວາງນັ້ນຮູບງາມ ເຈົ້າເຮີຍ
ອັນວ່າລາຊາເຈົ້າ ເຫັນກວາງຕົວອາດ
ພະກໍຄຶດຢາກໄດ້ ກວາງນັ້ນຊອບເຊີງ
ພະຈຶ່ງຂຶ້ນຂີ່ມ້າ ເລີຍໄລ່ກວາງຄໍາ
ກວາງກໍປົບໄປມາ ຮອບວຽນວົງອ້ອມ
ຈັກວ່າຫລົງໄປແທ້ ທາງໃດບໍ່ຮູ້ແຫ່ງ
ຝູງຂ້າຫລົງຈາກເຈົ້າ ບຸນກວ້າງບໍ່ເຫັນ ແທ້ແລ້ວ

ແຕ່ນັ້ນເທວີແກ້ວ ໄດ້ຍິນຄໍາຂຸນກ່າວ
ອົກວູ່ຮ້ອນ ປານໄຫມ້ໝົ່ນແປວ
ນາງຄານແກ້ວ ເທວີຕົນອາດ
ກໍຈິ່ງຄຶດຮອດເຈົ້າ ຫອງຮ້ອນເກືອນກະຫາຍ
ນາງຈຶ່ງຜາຍຄໍາຕ້ານ ດອມຂຸນທຸກໝູ່
ດູລາອາມາດທ້າວ ຈິ່ງແທ້ດັ່ງລີ
ຄັນວ່າເສືອສາງຊ້າງ ໃນດົງຄັ່ຽວຄາບ ກິນນັ້ນ
ຫລ້າງຈັກມີຜູ້ຮູ້ ເຫັນແຈ້ງເຫດນໍາ ບໍ່ປ່າແລ້ວ
ຈຽມແຕ່ສູແທ້ອ້າ ລາຊານໍລະນາດ ນັ້ນແລ້ວ
ສູຈຶ່ງມາກ່າວຕ້ານ ພາງຖ້ອຍຕໍ່ກູ ນີ້ເດ
ຊາດທີ່ຄົນເຫລືອລົ້ນ ພໍພັນແຫນແທ່
ຫລ້າງຈັກມີຜູ້ຮູ້ ເຫັນເຈົ້າທີ່ໄປ ຫັ້ນແລ້ວ
ບັດນີ້ສູຫາກໄລເສັຽເຈົ້າ ຈອມເມືອງພູວະນາດ ຈິ່ງແລ້ວ
ພອຍເລົ່າປະໄປເຈົ້າ ບຸນກວ້າງບໍ່ຄອຍນັ້ນລີ
ຄ້ອນວ່ານາງກ່າວແລ້ວ ກົວໂກດໂກທາ
ເຄັ່ງງສຽງ ກ່າວກອນຖະແຫລງຖ້ອຍ
ບັດນີ້ສູຈຶ່ງຄືນໄປທ້ອນ ຍາດົນຊ້າຢູ່
ຈຶ່ງໃຫ້ໄປຕາມເອົາວິເສດເຈົ້າ ບຸນກວ້າງປ່ານານທ່ຽວເຫັນ
ຄັນວ່າກູບໍ່ເຫັນໜ້າອົງຈອມເຈົ້າລາຊາຈິຕັດຂາດ ຄໍສູນັ້ນ
ຊີວິດກູບໍ່ໄວ້ ວາງໃຫ້ແກ່ສູ ແທ້ດາຍ
ກັບທັງໝໍໂທນເຖົ້າ ເອົາຫົວປັກສຽບ
ມັນຫາກມາກ່າວຕ້ານ ພາງເຈົ້າພາກເມືອງ ຫັ້ນແລ້ວ
ແຕ່ນັ້ນຂຸນກໍປາກບໍ່ໄດ້ ນົບນອບຈອມນາງ
ລາປາງທອງ ລວດລົ້ງມີຊ້າ
ມາເຖິງຫ້ອງ ເຕີນກັນເຕົ້າໝູ່
ຂຸນໃຫຍ່ຂຶ້ນຂີ່ມ້າ ພົນລ້ອມຕ່າວຄືນ
ໄຫລຫລາມເຂົ້າ ຄີລີຍາວໂຍດ
ກໍພາກັນຊອກເຈົ້າ ບຸນກວ້າງທີ່ເຊີງ
ກໍບໍ່ເຫັນຮອຍເຈົ້າ ໄປມາຫລາຍເລົ່າ
ເຂົາກໍຄຶດໂສກເສົ້າ ເຖິງເຈົ້າຫວ່ອນເຫວົາ ແທ້ແລ້ວ
ບັດນີ້ຊາດົກບັ້ນ ເສນາເຊົາກ່ອນ
ຈັກຈິຖ້າວເຖິງພະບາດທ້າວ ທົງມ້າໄລ່ກວາງ ກ່ອນແລ້ວ
ເຈົ້າກໍຕາມກວາງເຂົ້າ ເຖິງດົງດອຍໃຫຍ່
ອັນວ່າພະບາດທ້າວ ຕາມສົ້ນບໍ່ວາງ
ພະກໍລືມເສັຽອ້າ ໂຍທາພວກໄພ່
ເພືອວ່າຟາງໄລ່ເນື້ອ ໄປໜ້າໜ່ວງໜາ
ພໍຄາວແລ້ວ ກວາງທອງກັບກ່າຍ
ມາຮັກສາທ່ອນທ້າວ ບັນດົນໃຫ້ດຸ່ງເດີນ ແທ້ແລ້ວ

ແຕ່ນັ້ນລາຊາເຈົ້າ   ຈອມເມືອງພູອະນາດ
ພະກໍຫລິງຫລໍ່າປ໊ຽມ   ກວາງນັ້ນກໍບໍ່ເຫັນ
ກໍເລົາຫາຍເສັຽແທ້   ກວາງທອງສູນເປົ່າ
ກວາງກໍກັບເພດເປັນເທບພະໄທ້ຣັກສາເຈົ້າບັນດົນ ແທ້ແລ້ວ
ແຕ່ນັ້ນພະຍາກໍຄະນຶງເຖິງອ້າ   ເສນາພວກໄພ່
ເຈົ້າກໍຄຶດຄ້ອຍໆ   ຄະນຶງຂຸ້ນຮໍ່າເພິງ
ບັດນີ້ກູກໍຫລົງເຂົາແລ້ວ   ໄປທາງໃດບໍ່ຮູ້ແຫ່ງ
ອັນນຈັກວ່າດົງດ່ານດ້າວ   ໄພກວ້າງທີ່ໃດ ນໍເດ
ກໍຫ່າກດູໄກລໍ້າ   ໄພຂວາງຍາວໂຍດ
ມີແຕ່ແສນສໍ່າໄມ້   ຜາຂັ້ນຊ່ອງຊັນ
ແຕ່ນັ້ນພູທອນທ້າວ   ຈົງໃຈຄຶດຮໍ່າ
ເພື່ອວ່າຫລົງປ່າໄມ້   ໄພກວ້າງກ່ວາໄກ
ບັດນີ້ກູກໍພັດຈາກເສນາອ້າ   ໂຍທາທຸກຫມູ່
ເພື່ອວ່າກູຫາກຕິຖຸບມ້າ   ຕາມສົ້ນໄລ່ກວາງ
ເມື່ອວ່າກູຈັກຄືນເມືອງຫ້ອງ   ເມືອງຕົ້ນສັນເກົາ
ກໍບໍ່ຮູ້ແຫ່ງຫ້ອງ   ເມືອງບ້ານຢູ່ທີ່ໃດ ແທ້ແລ້ວ
ແຕ່ນັ້ນລາຊາເຈົ້າ   ຕົນດຽວຄະນຶງຢູ່
ພະບາດທ້າວ   ຫລຽວຊ້າຍແລະຂວາ
ເຫັນດົງຂ້ວາງ   ນາງຫລາຍສໍ່າ
ພູອະນາດທ້າວ   ເລີຍເສົ້າຫງ່ວມເຫງົາ
ແຕ່ນນເທວະດາເຈົ້າ   ເຫັນພະອົງກັ້ນໂສກ
ທັງເລົາຄຶດລົງແລ້ນ   ເຖິງອ້າໄພ່ພົນ
ເຈົ້າຈິງມາບັນດົນໃຈທ້າວ   ບັນເທົາຫາຍໂສກ
ແລ້ວຈິງຈູງຈ່ອງທ້າວ   ທັງມ້າແກ່ໄປ
ກໍຈິງກາຍເຂົາຂັ້ນ   ບັບພະໂຕຫລາຍຍ່ານ
ພໍເມື່ອແສງສ່ອງໄມ້   ຕາວັນເຂົ້າຂອບເຂົາ
ພະຈິງແຍງໄຊກວ້າງ   ດົກຫນາຮົ່ມໃຫຍ່
ພະຈິງລົງຈາກມ້າ   ເລີຍຍັ້ງຈອດເຊົາ
ແຕ່ນັ້ນເທວະດາເຈົ້າ   ຣັກສາອົງຕົນປະເສີດ
ພະກໍມີລະມຶດສະອ່າງນໍ້າໃຫ້   ພະອົງເຈົ້າອາບກິນ ແທ້ແລ້ວ
ແຕ່ນັ້ນຕາວັນເຂົ້າ   ເຂົາທອງມົວມືດ ມາແລ້ວ
ຝູງເທບພະດາພໍ່າພ້ອມ   ຣັກສາເຈົ້າຫມື່ນອົງ ແທ້ແລ້ວ
ແຕ່ນັ້ນລາຊາເຈົ້າ   ຈອມເມືອງພະບາດ
ເຖິງເມື່ອຍາມຄໍ່າຄ້ອຍ   ປັດແຜ້ວບ່ອນຊິນອນ
ຈອມບຸນທ້າວ   ຕົນດຽວທຸກໂສກ
ພະກໍຄຶດຮໍ່າຮູ້   ໂຮງກວ້າງແຫ່ງຕົນ
ໂອນໍຍາມເມື່ອກູຫາກເນົານອນຫ້ອງໂຮງທອງຜາສາດ ກູນັ້ນ
ມີທັງມຸ້ງມ່ານກັ້ງ   ບັງຫ້ອງແທ່ນທອງ

ມີທັງກັນລະຍາແກ້ວ   ເທວີແຝງພ່າງ
ກັບທັງນາງສະຫນົມຫມູ່ລ້ອມ   ຂວາຊ້າຍແກ່ວງວີ
ບັດນີ້ກູຈັກເນົານອນແລ້ງ   ດິນດາຍບໍ່ມີເສື່ອ ແລນໍ
ເພື່ອວ່າຄວາມທຸກຂ້ອນ   ເຂັນຮ້າຍຄອບກູ ແລນາ
ຄ້ອມວ່າພົນຈົບແລ້ວ   ຄະນຶງຮຸ່ງພາຍຫລັງ
ຊົນລະທາໄຫລ   ເນດນອງຮໍາຫນ້າ
ອັນວ່າມະເຫສີແກ້ວ   ເທວີແຝງພ່າງ ກູນັ້ນ
ປານນີ້ນາງກໍເນົາຢູ່ຫ້ອງ   ຫໍແກ້ວສ່ວນຊິຄອງ ແລນໍ
ບັດນີ້ເວລາຕ້ອງ   ໄກນາງຣາມຫ່າງ
ພີກໍພັດພາກເຈົ້າ   ໄກແກ້ວບໍ່ເຫັນ ແທ້ແລ້ວ
ຄ້ອມວ່າແລ້ວ   ໄສຍານິດທະເນົ່າ
ພະກໍທົບຈີບຜ້າຫົ່ມເນື້ອ   ດີແລ້ວເລົານອນ
ເຈົ້າກໍຄອນໆຄໍ້າ   ຕົນດຽວຄຶດຮຸ່ງ
ພະກໍຫລັບບໍ່ໄດ້   ນໍ້າຕາຍ້ອຍເນດນອງ ແທ້ແລ້ວ
ຟັງສຽງຈິວວິວຮ້ອງ   ໄພສົນກ້ອງເຖື່ອນ
ມີທັງເປັດປ່ອງຮ້ອງ   ປາຍໄມ້ສົ່ງສຽງ ແລນໍ
ອັນນຶ່ງ   ພະກໍຟັງຍິນສຽງເສືອສາງຊ້າງ ທອນຫຽວກາງປ່າ
ກັບທັງສັດສີ່ງຮ້ອງ   ດົງກວ້າງທົ່ວໄພ ແທ້ແລ້ວ
ແຕ່ນັ້ນພະກໍໄສຍາເຍື້ອນ   ເນົານອນນິດທະເນົ່າ
ເຈົ້າກໍຫລັບຍິບຍັ້ງ   ໃນຜ້າຊ່ວຍາມ
ເຖິງເມື່ອເດິກໆຂ້ອນ   ລົມບິນຫນາວຫນ່ວງ ມາແລ້ວ
ເຫມື່ອຍປາດຍ້ອຍ   ຮໍາຫນ້າຊຸ່ມເຢັນ
ພໍເມື່ອລາຕີຄ້ອຍ   ຍາມແຖໃກ້ຮຸ່ງ ມານັ້ນ
ຟັງຍິນໄກ່ເຖື່ອນຮ້ອງ   ຂັ້ນຂຸ້ນຮຸ່ງຈວນ
ແຕ່ນັ້ນຕາວັນຂຶ້ນ   ເຂົາທອງເຮືອງເຮືອ
ນ່ອຍນຶ່ງແຈ້ງ   ຄວາງຟ້າສ່ອງໃສ
ພະກໍລຸກສວ່າຍຫນ້າ   ແລ້ວຂໍອາຊະໄນ
ແລ້ວເລົາເດີນໄພສົນ   ຕໍ່ໄປພາຍຫນ້າ
ພະກໍ   ຫລິງເຫັນທັກທົ່ນໄມ້   ຊ້ອງຊູ່ຍູງຍາງ ພຸ້ນເຢີ
ນາງຫລາຍ   ທົ່ວພົງໄພກວ້າງ
ຍາມເມື່ອລົມພານອູ້ມ   ສາຂາໄຫວຫວັ່ນ
ລົມໄປເປື້ອງ   ຄວຍຄ້ອມງ່າຄອມ
ແຕ່ນັ້ນພູທອນທ້າວ   ແຖມລວາຊໍ້າແລ່ນ
ພູອະນາດທ້າວ   ທົງມ້າລ່ວງກາຍ
ພະກໍຫລິງເຫັນດອຍຫລວງຂັ້ນ   ຜາຊັນແສນງ່ອນ
ພະທ່ອນທ້າວ   ທົງມ້າດ່ວນໄປ
ຟັງຍິນສັກກຸນາຮ້ອງ   ໄພສົນຫາຄູ່
ກັບທັງຫອມດອກໄມ້   ໂຮຍເຮົ້າທົ່ວດົງ

ຍາມເມືອໄກສອນຟ້າ ລົງດິນຣິດຮ່ອງ
ແມງຜູ່ຕອມດອກຈ້ອນ ຫອມເຮົາເມືອແລງ ແທ້ແລ້ວ
ແຕ່ນັ້ນລາຊາເຈົ້າ ໂສກາກັ້ນໂສກ
ຈິດທະຈອດນ້ອງ ຄະນຶງແກ້ວຍອດນາງ
ໂອນໍປານນີ້ອົກຄືນ້ອຍ ກັນລະຍາເມັຽມິ່ງ ກູນັ້ນ
ນາງກໍເມົາຢູ່ຫ້ອງ ປາງກວ້າງພໍ່ຄອຍ ແລນໍ
ບັດນີ້ກູກໍໄກເສັຽແລ້ວ ກັນລະຍານາງນາດ
ພີກໍພັດພາກຮ້າງ ໄກອ້າງບໍ່ເຫັນ ແລນໍ
ແຕ່ນັ້ນລາຊາເຈົ້າ ຈອມເມືອງພູວະນາດ
ພະກໍຫິງສະອາດມ້າ ໄປຫນ້າບໍ່ຫນາ
ທັງເລົ້າຫລັງເຫັນຫ້ອງ ຜາແດງຊ້ອງຊໍ່
ຄືດັ່ງຜາສາດຕັ້ງ ປາງແກ້ວພາກມາ ນັ້ນເດ
ໂອນໍ້ນັບແຕ່ເມັຽກູຈ້ອນ ພົນນາງນ້ອຍຫນຸ່ມ
ເຂົາກໍເມົາຢູ່ຫ້ອງ ທໍແກ້ວ **ຫງ່ວນ**ເຫງົາ ແລນໍ
ຄ້ອມວ່າພະຈື່ມແລ້ວ ຊົມລະເມດນອງຕົກ
ຄຶດຄະນຶງເມືອຫລັງ ຄ່ອຍເດີນໄປຫນ້າ
ພໍເມືອຫລາຍວັນແລ້ວ ຫລາຍຄືນດັ້ນດົ່ງ ໄປນັ້ນ
ກໍຈິ່ງເຖິງແຫ່ງຫ້ອງ ເມືອງບ້ານປະເທດຄົນ
ແຕ່ນັ້ນລາຊາເຈົ້າ ຊໍາລວາເລີຍແລ່ນ
ເຂົ້າສູ່ຫ້ອງ ເມືອງກວ້າງຫລ້າກູ
ກໍບໍ່ມີໃຜຜູ້ ວາຈາເຢັນຢູ່
ເຫັນແຕ່ກາແລະແຮ້ງ ບິນກົ້ວແສ່ວຕອມ
ແຕ່ນັ້ນລາຊາເຂົ້າ ມອງດູຫລິງຫລ້າ
ເຫັນຫມູ່ເຮືອນເປົ່າຮ້າງ ຄົນນັ້ນບໍ່ມີ
ເຈົ້າກໍເດີນຜັນເຂົ້າ ໃນເມືອງຫລິງຫລ້າ
ເຫັນແຕ່ກອງກະດູກນັ້ນ ເຕັມພົ້ນດາດຂາວ
ແຕ່ນັ້ນພະບາດທ້າວ ຫລິງຫລ້າໄປມາ
ລາຊາຄຶດ ຮ່ຳເພິງຈິງແທ້
ອັນນີ້ຈັກວ່າເປັນເຂັນຂ້ອງ ຄົນຕາຍມຸນນອດ
ປະກະດູກໄວ້ ເຕັມພົ້ນດາດຂາວ ນີ້ເດ
ກັບທັງດູກຊ້າງມ້າ ຝູງຫມູ່ງົວຄວາຍ
ກອງເຕັມເມືອງ ເຮັ່ງຮວາຍເຕັມພົ້ນ
ອັນນີ້ຈັກວ່າເກີດພາກຮ້າຍ ພີທ່າກິນຫມົດ ນັ້ນລື
ຫລືວ່າເຂົາກິນສັງ ເບື່ອເມົາຕາຍມ້ວຍ
ແຕ່ນັ້ນ ເຈົ້າກໍເດີນໄປຫນ້າ ກາງເມືອງຫລິງຫລ້າ
ກໍຈິ່ງເຫັນຫມູ່ຂອງຕະຫລາດຕັ້ງ ເຕັມພົ້ນລຽບທາງ
ເຫັນທັງເງິນຄຳພ້ອມ ອາພອນອະນັນເນກ
ຕັ້ງຕະຫລາດໄວ້ ເຕັມລຸ້ມດາດແດງ ແທ້ແລ້ວ

ແຕ່ນັ້ນພະກໍເດີນໄປຫນ້າ ເມີນດູຫລິງຫລ້າ
ເຫັນຫມູ່ຜາສາດຕັ້ງ ເຫລືອງເຫລື້ອມຮຸ່ງເຮືອງ
ແຕ່ນັ້ນເຈົ້າກໍຜາຍຕີນເຂົ້າ ໃນວັງຫລິງຫລ້າ
ກໍບໍ່ມີຜູ້ອື້ ໄອແທ້ກໍ່ເຢັນ
ເຫັນແຕ່ຫົວຄົນກ້ອງ ເຕັມໂຮງເດັຽລະດາດ
ກໍທາກເຕັມແຜ່ນພົ້ນ ວັງກວ້າງຊູ່ພາຍ
ແຕ່ນັ້ນເຈົ້າກໍຜັນຍັງມ້າ ໄປດູຫລິງຫລ້າ
ສົ້ງພຸ້ນພົ້ ບໍ່ເຫັນແທ້ຫມູ່ຄົນ
ບາກ່ອນສູ່ຫ້ອງ ໂຮງກວ້າງຫລ້າດູ
ພະກໍຄະນຶງເຖິງຫ້ອງ ເມືອງຕົນແອວຍິງ
ເຈົ້າຈິງຫລິງຫລ້າປ້ຽມ ໃນຫ້ອງທ່ຽວດູ
ກໍຈິງເຫັນກອງຫ້ອຍ ໃນໂຮງດູໃຫຍ່
ພະຈີງຍຽວຍ່ອງຍີ້ ມື້ອນຕ່ອຍຕີ
ແຕ່ນັ້ນປັດຫຸມມານ້ອຍ ໃນກອງຕ້ານປາກ
ມຶງຈື່ງມາກິນທ້ອນ ຜີເຢັນຮຸ້ງໃຫຍ່
ກູຈັກທານທອດໃຫ້ ວາງເນືອແກ່ມຶງ ແທ້ແລ້ວ
ມຶງຈື່ງໄຂກິນທ້ອນ ຢ່ານານແອວຮີບ
ຕາງໃຫ້ດັບຊີວຊ້ຳ ນຳເຈົ້າພໍ່ກູ ຫັ້ນທ້ອນ
ແຕ່ນັ້ນລາຊາທ້າວ ໄດ້ຍິນສຽງນາງປາກ
ພະບາດເຈົ້າ ເອົາວ້າວແຫກດູ
ກໍຈິງເຫັນນາງນ້ອຍ ກອງແພງງາມຍິ່ງ
ເຈົ້າກໍປາກກ່າວຕ້ານ ຄຳພຽນກ່າວຖາມ
ນາງເຮີຍເຈົ້າສັງມານອນລີ້ ໃນກອງອັ້ງຢູ່ ຈັ່ງນີ້
ຈັກວ່າເປັນເຫດຮ້ອນ ນາງເຂົ້າຢູ່ກອງ ນີ້ເດ
ແຕ່ນັ້ນປັດຫຸມມານ້ອຍ ນາງຄານຂານຕອບ
ນາງກໍບົ່ນບອກແຈ້ງ ຜາຍພຽນຄ່ອຍຈາ
ບັດນີ້ເປັນເຂັນຂ້ອນ ອົນຕາຍບັງເກີດ
ເປັນເຫດຮ້າຍ ພີຮຸ້ງທ່ຽວກິນ ພະເຮີຍ
ອັນແຕ່ໃນເມືອງກວ້າງ ມັນກິນປັດຂອດ
ກໍບໍ່ມີຜູ້ຫລໍຢູ່ຄ້າງ ເມືອງນີ້ເປົ່າດາຍ ເຈົ້າເຮີຍ
ຍັງແຕ່ຕົວດຽວຂ້າ ໃນກອງລີ້ຢູ່
ພໍ່ແມ່ເອົາເຊືອງໄວ້ ຍັງຄ້າງບໍ່ຕາຍ ແທ້ແລ້ວ
ແຕ່ຮ່າພະພີເຈົ້າ ມາແຕ່ເມືອງໃດ ນັ້ນເດ
ເຈົ້າກໍເດີນຈອນເຖິງ ທີ່ເມືອງພາຍພີ້
ເຊີນພະຫນີໄປທ້ອນ ຍາດິນຊ້າຢູ່
ຢ້ານແຕ່ພີເພດຮ້າຍ ເຫັນເຈົ້າຈັກກິນ ບໍ່ຢ່າແລ້ວ
ສັງຊຸມາຕາຍມ້ຽນ ດອມຮຽມເສັຽເປົ່າ
ເຊີນພີເຈົ້າ ຫນີທ້ອນຢ່ານານ ພີເຮີຍ

ແຕ່ນັ້ນລາຊາທ້າວ ໄດ້ຍິນສຽງນາງກ່າວ
ພະກໍຮັບພາກຖ້ອຍ ຈາຕ້ານຕໍ່ນາງ
ພີ່ກໍມາແຕ່ຫ້ອງ ເມືອງໃຫຍ່ປັນຈາ
ຣຽມກໍເດີນໄພສົນ ຄ່ວາມາເອົານ້ອງ
ພີ່ກໍມາປະສົງນ້ອງ ຈິເອົານາງເວັ້ນຫລີກ
ຝູງໝູ່ພີ່ເຜດຮູ້ງ ຈິເອົານ້ອງຫລີກໄກ ພີ່ແລ້ວ
ຂໍໃຫ້ນ້ອງອອກຈາກຫ້ອງ ກອງໃຫຍ່ລົງມາ ພີ່ທ້ອນ
ຣຽມຈັກເອົາອວນໜີ ຈາກໄພຍອັນນີ້
ແຕ່ນັ້ນນາງກໍຟັງກອນເຈົ້າ ລາຊາເວົ້າມ່ວນ
ນາງກໍຍົວລະຍາດຍ້າຍ ເຜີຍໜ້າອອກດູ
ກໍຈີງເຫັນບາທ້າວ ພູມີຢືນຢູ່
ນາງກໍກະກ່າງກ້າຍ ຄານອອກຈາກກອງ
ນາງກໍຍໍມືໄຫວ້ ຕີນບຸນພາຍໂພດ
ຂໍໃຫ້ພະພີ່ເຈົ້າ ເອົານ້ອງດ່ວນໜີ ທ່ຽວເຫີ້ນ
ຄັນວ່ານານໜີແທ້ ຍັງດົນຊ້າຢູ່
ກົວແຕ່ພີ່ຍັກຮູ້ງ ຕົວຮ້າຍເລືອນມາ ພີ່ເຮີຍ
ແຕ່ນັ້ນເຈົ້າກໍໂຊມເອົາແກ້ວ ກອງແພງໂລມລູບ
ສີແຈ່ມເຈົ້າ ມາຍໜ້າຊື່ນຊົມ
ລາຊາເຈົ້າ ຈານາງຄຳມ່ວນ
ເທື່ອນີ້ພີ່ຈັກເອົາຍັງແກ້ວ ຄຳກອງເປັນຄູ່ ຣຽມແລ້ວ
ພົ້ນທາກແມ່ນເຊື້ອໜໍ່ຟ້າ ເມືອງໃຫຍ່ນະຄອນຫລວງ ທີ່ພຸ້ນ
ພີ່ຈັກເອົາໄປເປັນເທວີ ຢູ່ໂຮງປາງແກ້ວ
ອັນວ່າເມືອງຫລວງອ້າຍ ອັກຄີທົງຢູ່
ພີ່ຈັກເອົາໄປຕົນຊ້ອນ ເປັນເຫງົ້າພ້ຳສອງ
ຄ້ອນວ່າພະກ່າວແລ້ວ ພານາງຍ້າຍຍ່າງ
ອອກຈາກຫ້ອງ ປາງແກ້ວບໍ່ນານ
ລົງເຖິງມ້າ ອາຊະໄນຕົວອາດ
ພະບາດທ້າວ ເອົານ້ອງຂີ່ຮຽງ
ພູບານທ້າວ ລາຊາຕົນອາດ
ຂຶ້ນຊ້ອນທ້າຍ ນຳນ້ອງນັ່ງຮຽງ
ເຈົ້າກໍບາຍເອົາຜ້າ ສະໃບບາງຜູກຈ່ອງ
ແລ້ວຈີງຊັກແສ່ມມ້າ ແຖມແສ້ແລ່ນເປືອງ
ກໍຈີງພົ້ນຈາກຄຸ້ມ ວຽງລາດຊະວັງຫລວງ
ຈອມແພງຫລຽວ ຜໍ່ຄືນຫລິງຢ້ຽມ
ນາງກໍຄະນຶງເຖິງໄທ້ ປິດຕາພໍ່ແມ່
ຊົມລະເນດຍ້ອຍ ຮຳໜ້າຫລືງລົງ
ແຕ່ນັ້ນຈອມເມືອງທ້າວ ພານາງດັ້ນດ່ວນ
ເຂົ້າປ່າໄມ້ ໄປໜ້າກວ່າໄກ
ກໍຈີງກາຍແຫ່ງຫ້ອງ ຈັກຂົນເມືອງໃຫຍ່
ສອງໜໍ່ໄທ້ ໄປໜ້າບໍ່ເຊົາ
ແຕ່ນັ້ນລາຊາທ້າວ ຈານາງຄຳມ່ວນ
ອັນວ່າຜາສາດແກ້ວ ຣຽມພຸ້ນດົງດຽວ ພີ່ແລ້ວ
ພີ່ຈັກເອົານາງໄປທົ່ງຫ້ອງ ທໍຄຳຮຽງພີ່
ຝູງໝູ່ສາວພີ່ນ້ອງ ຈີປັນໃຫ້ທ່ອງຫຽວ ພີ່ແລ້ວ
ແຕ່ນັ້ນກອງແພງນ້ອຍ ໄດ້ຍິນຄຳທ້າວກ່າວ
ນາງກໍມ່າຍໆໜ້າ ຫົວແຍ້ມຕໍ່ບາ
ລາຊາທ້າວ ພານາງດັ້ນດ່ວນ
ເທວະດາພ້ຳພ້ອມ ສູເຈົ້າສົ່ງທາງ
ອັນວ່າບຸນເຮືອງທ້າວ ພານາງເຊົາຈອດ
ພໍຄາວແລ້ວ ພານາງຫາບ່ອນ
ພະກໍຫັກຝົດໄມ້ ປູແລ້ວເລົ່ານອນ
ພູທອນທ້າວ ເນົານອນຮຽງອ່ອນ
ຊະອ່ອນເນື້ອ ຄະນຶງຄ້ຳຮຸ່ງຫລັງ
ໂອນໍກູ້ນເກີດແຕ່ນ້ອຍ ບໍ່ເຄີຍຮ່ວມຮຽງສອງ
ພອຍເລົ່າບຸນຍັງເຖິງ ຮ່ວມຮຽງອັນນີ້
ໂອນໍພີ່ເຮີຍບັດນີ້ບຸນເຄີຍຊ້ອນ ແຝງພະອົງຮຽງຮ່ວມ
ສອງປິ້ນເປືອງ ສະແດງໜ້າຕ່າວຫລັງ
ສອງຊົມຊ້ອນ ພໍຄາວແລ້ວຢ່າ
ພະບາດທ້າວ ນອນກົ້ງກ່ອມນາງ
ເຖິງຍາມແລ້ວ ພານາງນິດທະເນົງ
ຫລັບຍີບນ້ອຍ ໃນຜ້າບໍ່ຕິງ
ພໍເມືອດຶກງ້ອນ ລາຕີໃກ້ຮຸ່ງ
ສອງແຈ່ມເຈົ້າ ແພງລ້ານຕື່ນມາ
ຟັງຍິນກຸດໂຕຮ້ອງ ອັນເນືອງໃນປ່າ
ອັນວ່າສອງແຈ່ມເຈົ້າ ລຸກອາບສົງສີ
ພໍຄາວແລ້ວ ເຫວີຍງາຍແລ້ວຢ່າ
ເລີຍເລົ່າຂຶ້ນຂີ່ມ້າ ຕົວອາດອາຊະໄນ
ມ້າກໍພາສອງສີ ລ່ວງກາຍໄປໜ້າ
ເຂົ້າປ່າໄມ້ ຫລາຍຫລື້ນພູຊັນ
ສອງກໍຜົນລວາຜາຍ ຜ່ານໄປມີຢ້ານ
ພໍເມືອຫລາຍວັນເຂົ້າ ຫລາຍຄືນເດີນດ່ວນ
ສອງກໍຂຶ້ນຂີ່ມ້າ ໄປເຊົ້າບໍ່ເຊົາ
ຝູງໝູ່ເທວະດາເຈົ້າ ແນມນຳຈອມລາດ
ກໍຈີງມາຊ່ອຍຫາຍ ທາງທ້າວຊ່ອຍແຮງ ແທ້ແລ້ວ
ອັນນີ້ ກໍທາກເປັນແຕ່ສົມພານເຈົ້າທັງນາງຢາງກ່ອນ
ຝູງໝູ່ເທບພະໄທ້ ບັນດົນເຂົ້າຊີເມືອງ

ແຕ່ນັ້ນບຸນເຮືອງທ້າວ ຊຳລວາພັນຜ່າ
ກໍຈີງເຖິງເຂດຫ້ອງ ໄພກວ້າງຈີມເມືອງ
ບັດນີ້ຍຸດຕິກາບົນ ສອງພະອົງເຊົາກ່ອນ
ຈັກຈິກ່າວຮອດເສເນດທ້າວ ເດີນດັ້ນທ່ຽວຕາມກ່ອນແລ້ວ
ເຂົາກໍໄປຈອບເຈົ້າ ທີລາດຈອມເມືອງ
ເຫັນນາງຄານ ຂີລວາຮຽງຊ້ອນ
ແຕ່ນັ້ນເຂົາກໍແຊວງຫ້ອງ ເສນາທຸກໝູ່
ເຂົາກໍປິບຟັງຟ້າວ ໄປຕ້ອນຮັບອົງ
ແຕ່ນັ້ນພະບາດເຈົ້າ ເຫັນໝູ່ເສນາ
ລາຊາຢຸດ ຈອດລວາເຊົາມ້າ
ແຕ່ນັ້ນເສນາໄຫວ້ ທູນອົງພູອະນາດ
ຝູງຂ້າຍຽວວ່າພະບາດເຈົ້າ ເສັຽແທ້ທ່ຽງຈິງ
ຝູງຂ້າເດີນດົງດັ້ນ ຕາມຫາທຸກແຫ່ງ
ກໍຫາກສຸດທີແມ້ງ ເຫລືອໄຫ້ອ່າວຄະນຶງ ພະເຮີຍ
ບັດນີ້ມາເຫັນໜ້າ ຈອມຊຸມພະບາດ
ເໝືອນດຶງຊາດໃໝ່ແລ້ວ ເຫັນໜ້າໃຫຍ່ມາ ແທ້ດາຍ
ພອຍເລົາມີໂຊກໄດ້ ເທວີຮຽງຮ່ອມ
ແຕ່ນັ້ນພະບາດເຈົ້າ ຂານຕໍ່ເສນາ
ແທນຄຳຄວນ ຕໍ່ເສນາແກ້ວ
ເຮົາກໍພັດໝູ່ເສນາທ້າວ ຫລົງໄປໄກຍີງ
ກໍຈີງຕົກເຂດຫ່ອງ ເມືອງກວາງທີໄກ
ອັນແຕ່ໃນເມືອງນັ້ນ ຄົນຕາຍມຸດມອດ
ເຂົາຈີງເອົາຍອດແກ້ວ ແພງໄວ້ໃສ່ກອງ
ເຮົາກໍເດີນເຖິງເທົ້າ ປາງທອງພາສາດ
ໄດ້ມາດນ້ອຍ ເອົາຜ້າຍດ່ວນໜີ
ບັດນີ້ບຸນມີແທ້ ເທວະດາຊູຊ່ອຍ
ກໍຈີງມາຮອດຫ້ອງ ແດນດ້າວແຫ່ງເຮົາ ທ່ານເຮີຍ
ແຕ່ນັ້ນເສນາໄດ້ ຍິນຄຳພະກ່າວ
ກໍຈີງຫາຍໂສກຮ້ອນ ເສັຽແລ້ວ ວ່າງວອນ
ເພື່ອວ່າຈອມເມືອງເຈົ້າ ໄຂຄຳເວົ້າຕໍ່
ກໍຈີງພາກັນນົບນອບນວ ຖວາຍເຈົ້າຊຸນຊືມ
ແຕ່ນັ້ນເສນາທ້າວ ເຕີນກັນຕົກແຕ່ງ
ຄາດເຄືອງຊ້າງ ທັງມ້າຮີບພະລັນ
ເຊີນເອົາເຈົ້າ ທັງນາງນ້ອຍນາດ
ຂັ້ນຂີ່ຊ້າງ ຕົວກ້າຂໍ່ນານ
ພໍຄາວແລ້ວ ພູທອນສະເດັດຍ່າງ
ພະຈີງພານາງຂັ້ນຂີ່ຊ້າງ ສານໃຫຍ່ມີນານ
ເສນາເມືອງ ແຫ່ຕາມຕີນຊ້າງ

ຍິດງຍ້າຍ ປະຄືອອກຕາມທາງ
ຝູງໝູ່ມຸນຕີພ້ອມ ທະຫານຫລາຍສ່ຳ
ຂັ້ນຂີ່ມາ ເຟືອນຟັ້ນແຫ່ຕາມ
ຟັງຍິນຄືນໆກ້ອງ ກອງໃຫຍ່ແຖເຫີນ ຟູ້ນເຢີ
ສຽງມັນເມືອງ ທົ່ວດົງດອນກວ້າງ
ອັນວ່າທິງຄະນາເມືອ ກວາງຟານເຕັ້ນຕືນ
ຝູງໝູ່ເສືອແຮດຊ້າງ ໜີເວັ້ນຫລີກທາງ
ແຕ່ນັ້ນເສນາທ້າວ ທັງພົນພວກໄພ່
ກໍຈີງແຫນແຫ່ເຈົ້າ ບຸນກວ້າງຕ່າວຄືນ
ຂວ້າມປ່າໄມ້ ຫລາຍຍ່ານພູຜາ
ກາຍຄີລີ ປ່າດອຍດົງກວ້າງ
ກໍຈີງເຖິງແດນດ້າວ ປັນຈານັກຄະລາດ
ພະບາດເຈົ້າ ບຸນກວ້າງຜໍ່ດູ
ພະກໍຄອຍໄກສຸດ ຊົ່ວຕາເຕັມຢຽມ
ແຕ່ນັ້ນບຸນເຮືອງທ້າວ ຈານາງເລີຍກ່າວ
ສີແຈ່ມເຈົ້າ ແພງລ້ານຫລ່ຳດູ ພີທ້ອນ
ອັນວ່າຮົງງເຫລື້ອມ ປາງທອງພາສາດ
ຫາກແມ່ນປາງເລີດລ້ຳ ເຮົາທ້າວຢູ່ທົງ ພີແລ້ວ
ແຕ່ນັ້ນກົມລະຍາແກ້ວ ຄຳກອງນາງນາດ
ອັນວ່າສີແຈ່ມເຈົ້າ ນາງນ້ອຍຜໍ່ດູ
ນາງກໍເຫັນຊໍ່ຟ້າ ໃສສ່ອງດວງປີ
ຮົງງໃສ ສ່ອງງາມເງົາແກ້ວ
ແລ້ວເລົ່າ ເຫັນທັງວຽງຫລວງກວ້າງສຸດຕາຜອມພໍ່
ກ້ອງເມກລ້ອມ ເປັນຖ້ານຖີຖັນ
ຈອມທັນແກ້ວ ຄຳກອງກະສັນໂສກ
ນາງກໍຄິດຮອດຫ້ອງ ເມືອງໄທ້ພໍ່ຕົນ
ອັນວ່າຮົງງເຫລື້ອມ ທໍ່ປາງພາສາດ
ກໍຫາກເໝືອນດົງປາງເລີດລ້ຳ ກູ້ນັ້ນພາກມາ ແທ້ນໍ
ບັດນີ້ເວລາຕ້ອງ ໄກເມືອງໜີຈາກ
ຈິງໄດ້ມາສູ່ຫ້ອງ ເມືອງນີ້ຕ່າງແດນ ແທ້ນໍ
ຄ້ອມວ່ານາງລະນຶກແລ້ວ ພົນຫລວງໄຫລຫລັງ
ເຂົ້າສູ່ຫ້ອງ ເມືອງກວ້າງຂໍ່ນານ
ແຕ່ນັ້ນຊາວເມືອງພ້ອມ ຍິງຊາຍນ້ອຍໃຫຍ່
ເຂົາຫລ່ຳຢຽມ ທັງຄ້າຍຜໍ່ຄອຍ
ກໍຈີງຫລິງເຫັນຊ້າງ ທັງຄົນແຫນແຫ່
ເຫັນທັງກົມລະຍາແກ້ວ ໂສມງາມນາງນາດ
ເຂົາກໍເມືອງມັນຫ້ອງ ຍິງຊາຍນ້ອຍໃຫຍ່
ທຸກປາກເວົ້າ ເລີຍຕ້ານຕໍ່ກັນ

# ຂໍໂທດຫຼາຍໆ



ປຶ້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ